ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ--110------/ປປທ

ນະຄອນຫຼວງວຽງຈັນ, ວັນທີ 19.06.2017.

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍສິນທິສັນຍາ ແລະ ສັນຍາສາກົນ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 05/ສພຊ, ລົງວັນທີ 08 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍສິນທິສັນຍາ ແລະ ສັນຍາສາກົນ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 010/ຄປຈ, ລົງວັນທີ 06 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍສິນທິສັນຍາ ແລະ ສັນຍາສາກົນ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 05 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08/05/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສິນທິສັນຍາ ແລະ ສັນຍາສາກົນ

---

ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສິນທິສັນຍາ ແລະ ສັນຍາສາກົນ ໃນວາລະກອງປະຊຸມ ວັນທີ 08 ພຶດສະພາ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສິນທິສັນຍາ ແລະ ສັນຍາສາກົນ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 18 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 08 ພຶດສະພາ 2017

# ກົດໝາຍ
# ວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສ້າງ ແລະ ຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ເພື່ອເຮັດໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ປະຕິບັດນະໂຍບາຍການຕ່າງປະເທດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ສົນທິສັນຍາ**

ສົນທິສັນຍາ ແມ່ນ ການຕົກລົງເປັນລາຍລັກອັກສອນ ທີ່ສ້າງຂຶ້ນໃນນາມ ສປປ ລາວ ຫຼື ໃນນາມລັດຖະບານ ແຫ່ງ ສປປ ລາວ ກັບພາຄີຕ່າງປະເທດ ຊຶ່ງພາໃຫ້ເກີດສິດ ແລະ ພັນທະຂອງ ສປປ ລາວ ຕາມກົດໝາຍສາກົນ ໂດຍໃສ່ຊື່ສະເພາະ ຕາມການເຫັນດີລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ ເປັນຕົ້ນ ສົນທິສັນຍາ, ສັນຍາ, ກົດບັດ, ຂໍ້ຕົກລົງ, ອະນຸສັນຍາ, ບົດບັນທຶກຄວາມເຂົ້າໃຈ, ບົດບັນທຶກການຮ່ວມມື, ຈົດໝາຍແລກປ່ຽນ ຫຼື ຊື່ອື່ນ.

**ມາດຕາ 3 ສັນຍາສາກົນ**

ສັນຍາສາກົນ ແມ່ນ ການຕົກລົງເປັນລາຍລັກອັກສອນທີ່ສ້າງຂຶ້ນໃນນາມອົງການຂັ້ນສູນກາງ, ອົງການຂັ້ນແຂວງ ຂອງ ສປປ ລາວ ກັບຄູ່ສັນຍາຕ່າງປະເທດກ່ຽວກັບການຮ່ວມມືສາກົນ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຊຶ່ງມີຜົນສັກສິດສຳລັບອົງການດັ່ງກ່າວເທົ່ານັ້ນ ໂດຍໃສ່ຊື່ສະເພາະຕາມການເຫັນດີລະຫວ່າງຝ່າຍລາວ ແລະ ຄູ່ສັນຍາຕ່າງປະເທດ ເປັນຕົ້ນ ສັນຍາ, ຂໍ້ຕົກລົງ,

ບົດບັນທຶກຄວາມເຂົ້າໃຈ, ບົດບັນທຶກການຕົກລົງ, ຈົດໝາຍແລກປ່ຽນ, ໂຄງການຮ່ວມມື, ແຜນການຮ່ວມມື ຫຼື ຊື່ອື່ນ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສົນທິສັນຍາທີ່ ສປປ ລາວ ເປັນພາຄີ** ໝາຍເຖິງ ສົນທິສັນຍາ ທີ່ ສປປ ລາວ ເປັນສະມາຊິກ ແລະ ມີຜົນສັກສິດສຳລັບ ສປປ ລາວ;

2. **ພາຄີຕ່າງປະເທດ** ໝາຍເຖິງ ລັດ, ອົງການຈັດຕັ້ງສາກົນ ຫຼື ອົງການອື່ນທີ່ຖືກຮັບຮູ້ຕາມກົດໝາຍສາກົນ;

3. **ທະວິພາຄີ** ໝາຍເຖິງ ສອງຝ່າຍ;

4. **ພະຫຸພາຄີ** ໝາຍເຖິງ ຫຼາຍຝ່າຍ;

5. **ສົນທິສັນຍາທະວິພາຄີ** ໝາຍເຖິງ ສົນທິສັນຍາສອງຝ່າຍ ລະຫວ່າງ ສປປ ລາວ ກັບ ພາຄີຕ່າງປະເທດໃດໜຶ່ງ;

6. **ສົນທິສັນຍາພະຫຸພາຄີ** ໝາຍເຖິງ ສົນທິສັນຍາຫຼາຍຝ່າຍ ລະຫວ່າງ ສປປ ລາວ ກັບ ສອງພາຄີຕ່າງປະເທດຂຶ້ນໄປ;

7. **ອົງການຈັດຕັ້ງສາກົນ** ໝາຍເຖິງ ອົງການຈັດຕັ້ງລະຫວ່າງລັດຖະບານ;

8. **ການເຊັນຫຍໍ້** ໝາຍເຖິງ ການປະຕິບັດຕາມກົດໝາຍໂດຍອົງການທີ່ມີສິດ ຫຼື ຜູ້ໄດ້ຮັບການມອບສິດ ເພື່ອຢັ້ງຢືນຄວາມຖືກຕ້ອງຕໍ່ຮ່າງສົນທິສັນຍາສະບັບທີ່ຈະຮ່ວມລົງນາມ;

9. **ການໂຈະການປະຕິບັດສົນທິສັນຍາ** ໝາຍເຖິງ ການຢຸດເຊົາຊົ່ວຄາວການປະຕິບັດບົດບັນຍັດທັງໝົດ ຫຼື ບາງສ່ວນ ຂອງສົນທິສັນຍາທີ່ ສປປ ລາວ ເປັນພາຄີ ໂດຍສະພາແຫ່ງຊາດ, ປະທານປະເທດ ຫຼື ລັດຖະບານ;

10. **ການໂຈະການປະຕິບັດສັນຍາສາກົນ** ໝາຍເຖິງ ການຢຸດເຊົາຊົ່ວຄາວການປະຕິບັດສັນຍາສາກົນ ໂດຍອົງການຂັ້ນສູນກາງ ຫຼື ອົງການຂັ້ນແຂວງ;

11. **ການຍົກເລີກສົນທິສັນຍາ** ໝາຍເຖິງ ການລົບລ້າງຜົນສັກສິດຂອງສົນທິສັນຍາທະວິພາຄີ ທີ່ ສປປ ລາວ ເປັນພາຄີ ໂດຍສະພາແຫ່ງຊາດ ຫຼື ລັດຖະບານ;

12. **ການຍົກເລີກສັນຍາສາກົນ** ໝາຍເຖິງ ການລົບລ້າງຜົນສັກສິດຂອງ ສັນຍາສາກົນ ໂດຍອົງການຂັ້ນສູນກາງ ຫຼື ອົງການຂັ້ນແຂວງ;

13. **ການລົບລ້າງ ຫຼື ການຖອນຕົວອອກຈາກສົນທິສັນຍາ** ໝາຍເຖິງ ການລົບລ້າງການຮັບປະຕິບັດສົນທິສັນຍາພະຫຸພາຄີ ທີ່ ສປປ ລາວ ເປັນພາຄີ ໂດຍສະພາແຫ່ງຊາດ ຫຼື ລັດຖະບານ;

14. **ຜູ້ເກັບຮັກສາສົນທິສັນຍາ** ໝາຍເຖິງ ປະເທດ ຫຼື ອົງການຈັດຕັ້ງສາກົນໃດໜຶ່ງ ທີ່ຖືກມອບໝາຍໃຫ້ຮັບຜິດຊອບໃນການເກັບຮັກສາສົນທິສັນຍາພະຫຸພາຄີ ທີ່ ສປປ ລາວ ເປັນພາຄີ;

15. **ຄູ່ສັນຍາຕ່າງປະເທດ** ໝາຍເຖິງ ລັດຖະສະພາ, ກົງຈັກການຈັດຕັ້ງພາຍໃນຂອງລັດຖະສະພາ, ສານສູງສຸດ, ໄອຍະການສູງສຸດ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຂັ້ນແຂວງ ຫຼື ອົງການຈັດຕັ້ງຂອງຕ່າງປະເທດ;

16. **ອົງການຂັ້ນສູນກາງ** ໝາຍເຖິງ ສະພາແຫ່ງຊາດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ກະຊວງ, ອົງການລັດທຽບເທົ່າກະຊວງ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;

17. **ອົງການຂັ້ນແຂວງ** ໝາຍເຖິງ ສະພາປະຊາຊົນແຂວງ, ນະຄອນຫຼວງ ຫຼື ອົງການປົກຄອງແຂວງ, ນະຄອນຫຼວງ.

## ມາດຕາ 5 ນະໂຍບາຍຂອງລັດກ່ຽວກັບວຽກງານສົນທິສັນຍາ ແລະ ສັນຍາສາກົນ

ລັດ ສົ່ງເສີມວຽກງານສົນທິສັນຍາ ແລະ ສັນຍາສາກົນ ຕາມແນວທາງນະໂຍບາຍການຕ່າງປະເທດຂອງ ສປປ ລາວ ບົນພື້ນຖານການຂະຫຍາຍສາຍພົວພັນ ແລະ ການຮ່ວມມືກັບທຸກປະເທດ, ການເປັນເຈົ້າການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ແລະ ການຮັບປະກັນຜົນປະໂຫຍດຂອງຊາດ, ຂອງປະຊາຊົນລາວບັນດາເຜົ່າ ເພື່ອສ້າງເງື່ອນໄຂ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

## ມາດຕາ 6 ຫຼັກການກ່ຽວກັບການສ້າງ ແລະ ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ

ການສ້າງ ແລະ ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ບໍ່ຂັດກັບລັດຖະທຳມະນູນແຫ່ງ ສປປ ລາວ;

2. ເຄົາລົບເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ຂົ່ມຂູ່ດ້ວຍກຳລັງ ຫຼື ນຳໃຊ້ກຳລັງ, ບໍ່ແຊກແຊງເຂົ້າໃນວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ຫຼັກການພື້ນຖານອື່ນຂອງກົດໝາຍສາກົນ;

3. ຮັບປະກັນຜົນປະໂຫຍດຂອງຊາດ, ຂອງປະຊາຊົນລາວບັນດາເຜົ່າ ແລະ ສອດຄ່ອງກັບນະໂຍບາຍການຕ່າງປະເທດຂອງ ສປປ ລາວ;

4. ເຄົາລົບ ແລະ ປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

ສຳລັບສັນຍາສາກົນ ຕ້ອງບໍ່ຂັດກັບກົດໝາຍພາຍໃນ ແລະ ຕ້ອງສອດຄ່ອງກັບສົນທິສັນຍາໃນຂົງເຂດດຽວກັນ ທີ່ ສປປ ລາວ ເປັນພາຄີ, ຮັບປະກັນຄວາມເປັນໄປໄດ້ໃນການປະຕິບັດ ແລະ ປະສິດທິຜົນຂອງສັນຍາສາກົນ, ອົງການທີ່ສ້າງສັນຍາສາກົນ ຕ້ອງປະຕິບັດສັນຍາສາກົນທີ່ຕົນສ້າງຢ່າງເຂັ້ມງວດ.

## ມາດຕາ 7 ພາສາທີ່ນຳໃຊ້ໃນສົນທິສັນຍາ ແລະ ສັນຍາສາກົນ

ສົນທິສັນຍາທະວິພາຄີ ຕ້ອງສ້າງເປັນພາສາລາວ ແລະ ພາສາທາງການຂອງພາຄີຕ່າງປະເທດ, ທັງສອງພາສາມີຄຸນຄ່າເທົ່າທຽມກັນ. ໃນກໍລະນີຈຳເປັນ ສາມາດເຮັດເປັນພາສາອື່ນຕາມການຕົກລົງ

ລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ ຊຶ່ງມີຄຸນຄ່າເທົ່າທຽມກັນ ແລະ ໃນກໍລະນີມີການຕີຄວາມໝາຍຕ່າງກັນ ສົນທິສັນຍາທີ່ເປັນພາສາອື່ນຈະໃຊ້ເປັນບ່ອນອີງ.

ໃນກໍລະນີສົນທິສັນຍາພະຫຸພາຄີ ໄດ້ສ້າງຂຶ້ນເປັນຫຼາຍພາສາ, ທຸກພາສາມີຄຸນຄ່າເທົ່າທຽມກັນ, ຍົກເວັ້ນມີການຕົກລົງເປັນຢ່າງອື່ນລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ. ໃນກໍລະນີສ້າງຂຶ້ນເປັນພາສາຕ່າງປະເທດ ເວລາປະກອບເອກະສານສະເໜີຂໍອະນຸມັດລົງນາມ ຕ້ອງແປເປັນພາສາລາວ.

ສັນຍາສາກົນ ຕ້ອງສ້າງເປັນພາສາລາວ ແລະ ພາສາທາງການຂອງຄູ່ສັນຍາຕ່າງປະເທດ, ເວັ້ນເສຍແຕ່ມີການຕົກລົງກັນເປັນຢ່າງອື່ນລະຫວ່າງຝ່າຍລາວ ແລະ ຄູ່ສັນຍາຕ່າງປະເທດ, ສັນຍາສາກົນສະບັບພາສາລາວ ແລະ ພາສາຕ່າງປະເທດຕ້ອງມີເນື້ອໃນສອດຄ່ອງກັນ. ໃນກໍລະນີສັນຍາສາກົນລົງນາມເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ.

**ມາດຕາ 8 ສົນທິສັນຍາ ແລະ ບົດບັນຍັດຂອງກົດໝາຍພາຍໃນ**

ໃນກໍລະນີສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ກົດໝາຍ, ນິຕິກຳໃຕ້ກົດໝາຍ ມີບົດບັນຍັດແຕກຕ່າງກັນໃນບັນຫາດຽວກັນໃຫ້ປະຕິບັດຕາມບົດບັນຍັດຂອງສົນທິສັນຍານັ້ນ.

ອີງຕາມຄວາມຮຽກຮ້ອງຕ້ອງການ, ເນື້ອໃນ ແລະ ລັກສະນະຂອງສົນທິສັນຍາ ໃນເວລາຕົກລົງຮັບປະຕິບັດສົນທິສັນຍາໃດໜຶ່ງນັ້ນ ສະພາແຫ່ງຊາດ ຫຼື ລັດຖະບານ ຕ້ອງ:

– ຕົກລົງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງປະຕິບັດສົນທິສັນຍານັ້ນໂດຍກົງ ທັງໝົດ ຫຼື ບາງສ່ວນ ເມື່ອບົດບັນຍັດຂອງສົນທິສັນຍານັ້ນລະອຽດຈະແຈ້ງແລ້ວ;

– ຕົກລົງ ຫຼື ສະເໜີ ສ້າງ, ປັບປຸງ, ຍົກເລີກ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອປະຕິບັດສົນທິສັນຍານັ້ນ.

ການສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕ້ອງສອດຄ່ອງກັບສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 9 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງກັບການສ້າງ ແລະ ການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ.

**ມາດຕາ 10 ການຮ່ວມມືສາກົນ**

ລັດ ຊຸກຍູ້ ແລະ ສົ່ງເສີມການຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົນທິສັນຍາ ແລະ ສັນຍາສາກົນ ດ້ວຍການເຂົ້າຮ່ວມກອງປະຊຸມ, ການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ຝຶກອົບຮົມ, ສຳມະນາຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ ຂອງວຽກງານສົນທິສັນຍາ ແລະ ສັນຍາສາກົນ.

# ພາກທີ II
# ການສ້າງສົນທິສັນຍາ

**ມາດຕາ 11 ການສ້າງສົນທິສັນຍາ**

ການສ້າງສົນທິສັນຍາ ແມ່ນ ການປະຕິບັດຕາມກົດໝາຍໂດຍອົງການທີ່ມີສິດ ໃນນັ້ນມີການເຈລະຈາ, ລົງນາມ, ໃຫ້ສັດຕະຍາບັນ, ຮັບຮອງ, ເຂົ້າຮ່ວມເປັນພາຄີ ຫຼື ແລກປ່ຽນສານ.

**ມາດຕາ 12 ວິທີການເປັນພາຄີຂອງສົນທິສັນຍາ**

ວິທີການເປັນພາຄີສົນທິສັນຍາຂອງ ສປປ ລາວ ມີ ດັ່ງນີ້:

1. ການລົງນາມສົນທິສັນຍາໂດຍບໍ່ຕ້ອງໃຫ້ສັດຕະຍາບັນ ຫຼື ຮັບຮອງ;
2. ການໃຫ້ສັດຕະຍາບັນແກ່ສົນທິສັນຍາ;
3. ການຮັບຮອງສົນທິສັນຍາ;
4. ການແລກປ່ຽນສານ;
5. ການເຂົ້າຮ່ວມເປັນພາຄີສົນທິສັນຍາ;
6. ວິທີການອື່ນ ຕາມການຕົກລົງກັບພາຄີຕ່າງປະເທດ.

**ມາດຕາ 13 ລະດັບສົນທິສັນຍາ**

ສົນທິສັນຍາມີ ສອງ ລະດັບ ຄື ສົນທິສັນຍາໃນນາມ ສປປ ລາວ ແລະ ສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ.

1. ສົນທິສັນຍາໃນນາມ ສປປ ລາວ ມີ ດັ່ງນີ້:

– ສົນທິສັນຍາທີ່ປະທານປະເທດລົງນາມໂດຍກົງ ຮ່ວມກັບປະມຸກລັດຕ່າງປະເທດ;

– ສົນທິສັນຍາກ່ຽວກັບບັນຫາການເມືອງ, ຄວາມໝັ້ນຄົງ, ສົງຄາມ, ສັນຕິພາບ, ອຳນາດອະທິປະໄຕຂອງຊາດ ແລະ ຜືນແຜ່ນດິນອັນຄົບຖ້ວນ;

– ສົນທິສັນຍາກ່ຽວກັບການສ້າງຕັ້ງ, ການເຂົ້າຮ່ວມເປັນສະມາຊິກຂອງອົງການຈັດຕັ້ງສາກົນ ຊຶ່ງການສ້າງຕັ້ງ, ການເຂົ້າຮ່ວມເປັນສະມາຊິກ ຫຼື ຖອນຕົວນັ້ນ ສົ່ງຜົນກະທົບຕໍ່ນະໂຍບາຍອັນເປັນພື້ນຖານດ້ານການຕ່າງປະເທດຂອງຊາດ, ຄວາມໝັ້ນຄົງ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ການເງິນ ແລະ ເງິນຕາ;

– ສົນທິສັນຍາທີ່ພາໃຫ້ເກີດການປ່ຽນແປງ, ຈຳກັດ ຫຼື ຍົກເລີກສິດທິມະນຸດ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ມະຕິຂອງສະພາແຫ່ງຊາດ;

– ສົນທິສັນຍາທີ່ສ້າງຂຶ້ນໃນນາມ ສປປ ລາວ ຕາມການຕົກລົງກັບພາຄີຕ່າງປະເທດ.

2. ສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ ມີ ດັ່ງນີ້:

– ສົນທິສັນຍາທີ່ບໍ່ໄດ້ສ້າງຂຶ້ນໃນນາມ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້;

- ສົນທິສັນຍາອື່ນທີ່ສ້າງຂຶ້ນໃນນາມລັດຖະບານ ແຫ່ງ ສປປ ລາວ ຕາມການຕົກລົງກັບພາຄີຕ່າງປະເທດ.

**ມາດຕາ 14 ອົງການທີ່ມີສິດສະເໜີສ້າງສົນທິສັນຍາ**

ອົງການທີ່ມີສິດສະເໜີສ້າງສົນທິສັນຍາ ຊຶ່ງຕໍ່ໄປນີ້ ເອີ້ນວ່າ "ອົງການທີ່ສະເໜີ" ມີ ດັ່ງນີ້:

1. ກະຊວງ, ອົງການລັດທຽບເທົ່າກະຊວງ;
2. ສານປະຊາຊົນສູງສຸດ;
3. ອົງການໄອຍະການປະຊາຊົນສູງສຸດ;
4. ອົງການກວດສອບແຫ່ງລັດ.

ສຳລັບສົນທິສັນຍາກ່ຽວກັບບັນຫາການເມືອງ, ຄວາມໝັ້ນຄົງ, ສົງຄາມ, ສັນຕິພາບ, ອຳນາດອະທິປະໄຕຂອງຊາດ ແລະ ຜືນແຜ່ນດິນອັນຄົບຖ້ວນນັ້ນ ໃຫ້ກະຊວງການຕ່າງປະເທດເປັນຜູ້ສະເໜີ ໂດຍສົມທົບກັບກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ອົງການອື່ນທີ່ກ່ຽວຂ້ອງ.

## ໝວດທີ 1
## ການເຈລະຈາສົນທິສັນຍາ

**ມາດຕາ 15 ການກະກຽມເຈລະຈາ**

ອົງການທີ່ສະເໜີ ມີຄວາມຮັບຜິດຊອບໃນການກະກຽມເຈລະຈາສົນທິສັນຍາ ດັ່ງນີ້:

1. ປະເມີນຜົນປະໂຫຍດ, ຜົນກະທົບທາງດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ-ສັງຄົມ ແລະ ຜົນກະທົບອື່ນຂອງສົນທິສັນຍາ;

2. ທົບທວນ ແລະ ສົມທຽບ ເນື້ອໃນຂອງຮ່າງສົນທິສັນຍາກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ສົນທິສັນຍາໃນຂົງເຂດດຽວກັນ ທີ່ ສປປ ລາວ ເປັນພາຄີ;

3. ສະເໜີຂໍຄຳເຫັນເປັນລາຍລັກອັກສອນນຳບັນດາອົງການທີ່ກ່ຽວຂ້ອງ. ອົງການດັ່ງກ່າວນັ້ນຕ້ອງແຈ້ງຕອບເປັນລາຍລັກອັກສອນໃຫ້ອົງການທີ່ສະເໜີ ພາຍໃນເວລາ ສິບຫ້າວັນ ລັດຖະການ.

**ມາດຕາ 16 ການສະເໜີເຈລະຈາ**

ອົງການທີ່ສະເໜີ ຕ້ອງນຳເອົາເອກະສານປະກອບການສະເໜີເຈລະຈາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້ ສະເໜີຕໍ່ກະຊວງການຕ່າງປະເທດ.

ກະຊວງການຕ່າງປະເທດ ຕ້ອງພິຈາລະນາການສະເໜີດັ່ງກ່າວ ພາຍໃນເວລາ ສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ. ຈາກນັ້ນ ກະຊວງການຕ່າງປະເທດ ກໍສະເໜີຕໍ່ລັດຖະບານເພື່ອພິຈາລະນາການເຈລະຈາສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ.

ສຳລັບສົນທິສັນຍາໃນນາມ ສປປ ລາວ ນັ້ນ ລັດຖະບານ ຕ້ອງນຳສະເໜີຕໍ່ປະທານປະເທດເພື່ອພິຈາລະນາຕົກລົງ ແລະ ລັດຖະບານ ຕ້ອງລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດຊາບ.

## ມາດຕາ 17 ເອກະສານປະກອບການສະເໜີເຈລະຈາ

ການສະເໜີເຈລະຈາ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ ທີ່ກຳນົດຄວາມຈຳເປັນ, ຄວາມຮຽກຮ້ອງຕ້ອງການ ແລະ ເປົ້າໝາຍການເຈລະຈາ; ເນື້ອໃນຕົ້ນຕໍຂອງຮ່າງສົນທິສັນຍາ; ຂໍ້ສະເໜີກ່ຽວກັບການເຈລະຈາ ແລະ ການມອບສິດເຈລະຈາ;

2. ບົດປະເມີນຜົນປະໂຫຍດ, ຜົນກະທົບທາງດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ-ສັງຄົມ ແລະ ຜົນກະທົບອື່ນຂອງສົນທິສັນຍາ;

3. ບົດລາຍງານຜົນຂອງການທົບທວນ ແລະ ສົມທຽບເນື້ອໃນຂອງຮ່າງສົນທິສັນຍາກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ສົນທິສັນຍາໃນຂົງເຂດດຽວກັນ ທີ່ ສປປ ລາວ ເປັນພາຄີ;

4. ຄຳເຫັນເປັນລາຍລັກອັກສອນຂອງອົງການອື່ນທີ່ກ່ຽວຂ້ອງ;

5. ບົດອະທິບາຍຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ ແລະ ມາດຕະການແກ້ໄຂ.

## ມາດຕາ 18 ຜູ້ມີສິດຕົກລົງໃຫ້ເຈລະຈາ

ຜູ້ມີສິດຕົກລົງໃຫ້ເຈລະຈາສົນທິສັນຍາມີ ດັ່ງນີ້:

1. ປະທານປະເທດ ມີສິດຕົກລົງ, ເປັນເຈົ້າການເຈລະຈາ ຫຼື ມອບສິດໃຫ້ລັດຖະບານເຈລະຈາສົນທິສັນຍາໃນນາມ ສປປ ລາວ;

2. ນາຍົກລັດຖະມົນຕີ ມີສິດຕົກລົງ, ເປັນເຈົ້າການເຈລະຈາ ຫຼື ມອບສິດໃຫ້ເຈລະຈາສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ.

## ມາດຕາ 19 ການຈັດຕັ້ງເຈລະຈາ

ອົງການທີ່ສະເໜີ ຕ້ອງປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງ ກ່ອນສະເໜີຕໍ່ກະຊວງການຕ່າງປະເທດກ່ຽວກັບແຜນການເຈລະຈາ, ຮ່າງສົນທິສັນຍາຂອງຝ່າຍລາວ ແລະ ການປະກອບຄະນະເຈລະຈາ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຂອງອົງການທີ່ສະເໜີ, ກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງໂດຍກົງ. ຈາກນັ້ນ ກະຊວງການຕ່າງປະເທດ ນຳສະເໜີຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງ.

ອົງການທີ່ສະເໜີ ຕ້ອງປຶກສາຫາລືກັບຜູ້ຕາງໜ້າຂອງອົງການອື່ນທີ່ກ່ຽວຂ້ອງ ທີ່ໄດ້ຮັບຜົນກະທົບໂດຍກົງຈາກສົນທິສັນຍາ ໃນເວລາດຳເນີນການເຈລະຈາ.

ອົງການທີ່ສະເໜີ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອລາຍງານນາຍົກລັດຖະມົນຕີກ່ຽວກັບບັນຫາທີ່ເກີດຂຶ້ນໃນເວລາເຈລະຈາ ແລະ ມາດຕະການແກ້ໄຂຢ່າງທັນເວລາ.

ອົງການທີ່ສະເໜີ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອລາຍງານຜົນຂອງການເຈລະຈາຕໍ່ອົງການທີ່ໄດ້ຕົກລົງໃຫ້ເຈລະຈາສົນທິສັນຍາ ພາຍຫຼັງສຳເລັດການເຈລະຈາ.

ລັດຖະບານ ມີໜ້າທີ່ລາຍງານໃຫ້ສະພາແຫ່ງຊາດຊາບກ່ຽວກັບສະພາບການເຈລະຈາຮ່າງສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ການລົງນາມສົນທິສັນຍາ

### ມາດຕາ 20 ການລົງນາມ

ການລົງນາມສົນທິສັນຍາ ແມ່ນ ການປະຕິບັດຕາມກົດໝາຍໂດຍອົງການທີ່ມີສິດ ຫຼື ຜູ້ໄດ້ຮັບການມອບສິດ ຊຶ່ງລວມມີ ການລົງນາມສົນທິສັນຍາທີ່ຈຳເປັນ ຫຼື ບໍ່ຈຳເປັນຕ້ອງໃຫ້ສັດຕະຍາບັນ ຫຼື ຮັບຮອງ.

### ມາດຕາ 21 ການສະເໜີລົງນາມ

ອົງການທີ່ສະເໜີ ຕ້ອງນຳເອົາເອກະສານປະກອບການສະເໜີຂໍອະນຸມັດລົງນາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້ ສະເໜີຕໍ່ກະຊວງການຕ່າງປະເທດ.

ກະຊວງການຕ່າງປະເທດ ຕ້ອງດຳເນີນການກວດກາສົນທິສັນຍາ ຕາມລະບຽບການທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້. ຈາກນັ້ນ ກະຊວງການຕ່າງປະເທດ ກໍສະເໜີຕໍ່ລັດຖະບານເພື່ອພິຈາລະນາການລົງນາມສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ.

ສຳລັບສົນທິສັນຍາໃນນາມ ສປປ ລາວ ນັ້ນ ລັດຖະບານ ຕ້ອງນຳສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາ.

### ມາດຕາ 22 ເອກະສານປະກອບການສະເໜີຂໍອະນຸມັດລົງນາມ

ການສະເໜີຂໍອະນຸມັດລົງນາມສົນທິສັນຍາ ຕ້ອງມີເອກະສານ ປະກອບ ດັ່ງນີ້:

1. ໜັງສືສະເໜີ ຊຶ່ງມີເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;
2. ຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ;
3. ບົດອະທິບາຍຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ, ມາດຕະການແກ້ໄຂ ແລະ ແຜນການຄາດຄະເນການປະຕິບັດສົນທິສັນຍາ;
4. ບົດລາຍງານກ່ຽວກັບການປະເມີນຜົນປະໂຫຍດ, ຜົນກະທົບທາງດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ-ສັງຄົມ ແລະ ຜົນກະທົບອື່ນຂອງສົນທິສັນຍາ;
5. ບົດລາຍງານກ່ຽວກັບຄວາມສອດຄ່ອງຂອງສົນທິສັນຍາກັບສົນທິສັນຍາໃນຂົງເຂດດຽວກັນ ທີ່ ສປປ ລາວ ເປັນພາຄີ;
6. ບົດລາຍງານກ່ຽວກັບຄວາມສອດຄ່ອງຂອງສົນທິສັນຍາ ກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;
7. ຮ່າງສົນທິສັນຍາ.

### ມາດຕາ 23 ເນື້ອໃນໜັງສືສະເໜີຂໍອະນຸມັດລົງນາມ

ໜັງສືສະເໜີຂໍອະນຸມັດລົງນາມສົນທິສັນຍາມີເນື້ອໃນ ດັ່ງນີ້:

1. ຄວາມຈຳເປັນ ແລະ ຈຸດປະສົງໃນການສະເໜີລົງນາມສົນທິສັນຍາ;

2. ເນື້ອໃນຕົ້ນຕໍຂອງສົນທິສັນຍາ;

3. ຊື່, ລະດັບຂອງສົນທິສັນຍາທີ່ຈະລົງນາມ, ຜູ້ຕາງໜ້າລົງນາມ, ພາສາ, ຜົນສັກສິດ, ວິທີການມີຜົນສັກສິດ ແລະ ການປະຕິບັດຊົ່ວຄາວສົນທິສັນຍາ;

4. ສິດ ແລະ ພັນທະ ທີ່ເນື່ອງມາຈາກສົນທິສັນຍາ ສໍາລັບ ສປປ ລາວ;

5. ຄວາມສອດຄ່ອງກັບຫຼັກການ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 6 ຂອງກົດໝາຍສະບັບນີ້;

6. ຂໍ້ສະຫງວນ, ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ, ຄໍາຖະແຫຼງກ່ຽວກັບສົນທິສັນຍາພະຫຸພາຄີ;

7. ການຕີລາຄາການປະຕິບັດສົນທິສັນຍາໂດຍກົງ ທັງໝົດ, ບາງສ່ວນ ຫຼື ການສະເໜີສ້າງ, ປັບປຸງ ຫຼື ຍົກເລີກກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ເພື່ອປະຕິບັດສົນທິສັນຍານັ້ນ;

8. ບັນຫາທີ່ຍັງມີຄໍາເຫັນແຕກຕ່າງກັນ ລະຫວ່າງອົງການທີ່ສະເໜີ ກັບອົງການອື່ນທີ່ກ່ຽວຂ້ອງ ຫຼື ລະຫວ່າງຝ່າຍລາວກັບພາຄີຕ່າງປະເທດ ແລະ ມາດຕະການແກ້ໄຂ.

**ມາດຕາ 24 ເນື້ອໃນການກວດກາຂອງກະຊວງການຕ່າງປະເທດ**

ເນື້ອໃນການກວດກາ ມີ ດັ່ງນີ້:

1. ຄວາມຈໍາເປັນ ແລະ ຈຸດປະສົງໃນການລົງນາມສົນທິສັນຍາ ບົນພື້ນຖານການຕີລາຄາສາຍພົວພັນລະຫວ່າງ ສປປ ລາວ ກັບພາຄີຕ່າງປະເທດ;

2. ຄວາມສອດຄ່ອງຂອງສົນທິສັນຍາກັບຫຼັກການພື້ນຖານຂອງກົດໝາຍສາກົນ;

3. ຄວາມສອດຄ່ອງຂອງສົນທິສັນຍາກັບຜົນປະໂຫຍດແຫ່ງຊາດ, ຜົນປະໂຫຍດຂອງປະ ຊາຊົນລາວບັນດາເຜົ່າ ແລະ ນະໂຍບາຍການຕ່າງປະເທດຂອງ ສປປ ລາວ;

4. ຄວາມສອດຄ່ອງຂອງຮ່າງສົນທິສັນຍາ ທີ່ສະເໜີຂໍອະນຸມັດລົງນາມກັບສົນທິສັນຍາໃນຂົງເຂດດຽວກັນ ທີ່ ສປປ ລາວ ເປັນພາຄີ;

5. ຄວາມສອດຄ່ອງກັບລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ລວມທັງຄວາມເປັນໄປໄດ້ ໃນການປະຕິບັດສົນທິສັນຍາໂດຍກົງ ທັງໝົດ ຫຼື ບາງສ່ວນ ແລະ ຄວາມຈໍາເປັນຕ້ອງສ້າງ, ປັບປຸງ ຫຼື ຍົກເລີກ ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ເພື່ອປະຕິບັດສົນທິສັນຍາ;

6. ຊື່, ພາສາ, ລະດັບສົນທິສັນຍາທີ່ຈະລົງນາມ, ຕໍາແໜ່ງຜູ້ຕາງໜ້າທີ່ຈະລົງນາມ, ຜົນສັກສິດ ແລະ ເຕັກນິກຂອງສົນທິສັນຍາ;

7. ການປະຕິບັດຕາມລະບຽບການ ສະເໜີຂໍອະນຸມັດລົງນາມສົນທິສັນຍາ;

8. ຄວາມເປັນເອກະພາບຂອງເນື້ອໃນຮ່າງສົນທິສັນຍາສະບັບພາສາລາວ ແລະ ພາສາຕ່າງປະເທດ.

ກະຊວງການຕ່າງປະເທດ ມີໜ້າທີ່ກວດກາທຸກບັນຫາກ່ຽວຂ້ອງກັບການສະເໜີລົງນາມສົນທິສັນຍາ ພາຍໃນເວລາ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ ຫຼື ພາຍໃນເວລາ ສີ່ສິບຫ້າວັນ ລັດຖະການ ໃນກໍລະນີຮ່າງສົນທິສັນຍາ ມີເນື້ອໃນສໍາຄັນ ແລະ ສະຫຼັບສັບຊ້ອນ.

ໃນກໍລະນີຮ່າງສົນທິສັນຍາມີເນື້ອໃນສໍາຄັນ ແລະ ສະຫຼັບສັບຊ້ອນ ລັດຖະມົນຕີກະຊວງການຕ່າງປະເທດ ຈະແຕ່ງຕັ້ງຄະນະກໍາມະການເພື່ອກວດກາສົນທິສັນຍາ ຊຶ່ງປະກອບດ້ວຍຜູ້ຕາງໜ້າ

ຈາກກະຊວງການຕ່າງປະເທດ, ກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະພາແຫ່ງຊາດ ແລະ ອົງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 25 ຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດກ່ຽວກັບການລົງນາມ**

ລັດຖະບານ ຕ້ອງສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ມີຄຳເຫັນກ່ຽວກັບການລົງນາມສົນທິສັນຍາ ດັ່ງນີ້:

1. ໄດ້ກຳນົດໄວ້ໃນມາດຕາ 13 ຂໍ້ 1 ຂອງກົດໝາຍສະບັບນີ້;

2. ມີບົດບັນຍັດກຳນົດໃຫ້ສັດຕະຍາບັນ;

3. ມີບົດບັນຍັດ ທີ່ຂັດກັບກົດໝາຍ ຫຼື ມະຕິຂອງສະພາແຫ່ງຊາດ;

4. ມີບົດບັນຍັດ ທີ່ແຕກຕ່າງກັບກົດໝາຍ, ມະຕິຂອງສະພາແຫ່ງຊາດ ຫຼື ທີ່ຍັງບໍ່ໄດ້ກຳນົດໄວ້ໃນກົດໝາຍ, ມະຕິຂອງສະພາແຫ່ງຊາດ;

5. ມີບົດບັນຍັດທີ່ຂັດກັບມະຕິຂອງຄະນະປະຈຳສະພາແຫ່ງຊາດ ຫຼື ລັດຖະບັນຍັດ;

6. ຈຳເປັນຕ້ອງສ້າງ, ປັບປຸງ ຫຼື ຍົກເລີກບົດບັນຍັດບາງສ່ວນຂອງກົດໝາຍ, ມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ຫຼື ລັດຖະບັນຍັດ ເພື່ອຈັດຕັ້ງປະຕິບັດ.

ຄະນະປະຈຳສະພາແຫ່ງຊາດ ຕ້ອງແຈ້ງຄຳເຫັນເປັນລາຍລັກອັກສອນກ່ຽວກັບການລົງນາມສົນທິສັນຍາ ພາຍໃນເວລາ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ປະທານປະເທດ ແລະ ລັດຖະບານ ຕ້ອງພິຈາລະນາຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ກ່ອນຕົກລົງໃຫ້ລົງນາມສົນທິສັນຍາ.

**ມາດຕາ 26 ອົງການທີ່ມີສິດຕົກລົງໃຫ້ລົງນາມ**

ອົງການທີ່ມີສິດຕົກລົງໃຫ້ລົງນາມສົນທິສັນຍາ ມີ ດັ່ງນີ້:

1. ປະທານປະເທດ ມີສິດຕົກລົງໃຫ້ລົງນາມສົນທິສັນຍາໃນນາມ ສປປ ລາວ;

2. ລັດຖະບານ ມີສິດຕົກລົງໃຫ້ລົງນາມສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ.

**ມາດຕາ 27 ເນື້ອໃນການຕົກລົງໃຫ້ລົງນາມ**

ການຕົກລົງໃຫ້ລົງນາມສົນທິສັນຍາ ມີເນື້ອໃນ ດັ່ງນີ້:

1. ຊື່ ແລະ ລະດັບສົນທິສັນຍາ;

2. ຊື່ ແລະ ຂອບເຂດສິດຂອງຜູ້ຕາງໜ້າລົງນາມສົນທິສັນຍາ;

3. ຂໍ້ສະຫງວນ, ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ແລະ ຄຳຖະແຫຼງກ່ຽວກັບສົນທິສັນຍາພະຫຸພາຄີ;

4. ຂອບເຂດຄວາມຮັບຜິດຊອບຂອງອົງການທີ່ສະເໜີ, ຂອງກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງ;

5. ການຕົກລົງປະຕິບັດສົນທິສັນຍາໂດຍກົງ ທັງໝົດ ຫຼື ບາງສ່ວນ; ການຕົກລົງສ້າງ, ປັບປຸງ ຫຼື ຍົກເລີກ ນິຕິກຳພາຍໃນ ເພື່ອປະຕິບັດສົນທິສັນຍາ.

**ມາດຕາ 28 ການທົບທວນ ແລະ ການປັບປຸງຮ່າງສົນທິສັນຍາ**

ອົງການທີ່ສະເໜີ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງ ເພື່ອທົບທວນ ແລະ ປັບປຸງຮ່າງສົນທິສັນຍາສະບັບທີ່ເປັນພາສາລາວ ແລະ ສະບັບທີ່ເປັນພາສາຕ່າງປະເທດ ເພື່ອຮັບປະກັນຄວາມຖືກຕ້ອງ, ສອດຄ່ອງທາງດ້ານເນື້ອໃນ ແລະ ຄວາມເປັນເອກະພາບ ກ່ຽວກັບຮູບແບບສົນທິສັນຍາ ກ່ອນດຳເນີນການເຊັນຫຍໍ້ ຫຼື ລົງນາມສົນທິສັນຍາ.

**ມາດຕາ 29 ການປະສານສົມທົບກ່ອນການລົງນາມ**

ອົງການທີ່ສະເໜີ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອກວດກາຮ່າງສົນທິສັນຍາເທື່ອສຸດທ້າຍ ແລະ ຈັດພິທີລົງນາມສົນທິສັນຍາກັບພາຄີຕ່າງປະເທດ.

ໃນກໍລະນີສົນທິສັນຍາ ຫາກມີການປ່ຽນແປງກ່ຽວກັບລະດັບ, ສິດ ແລະ ພັນທະ ຫຼື ມີບົດບັນຍັດທີ່ຂັດ ຫຼື ຍັງບໍ່ໄດ້ກຳນົດໄວ້ໃນກົດໝາຍພາຍໃນ ຫຼື ບັນຫາອື່ນທີ່ເປັນພື້ນຖານ ເມື່ອສົມທຽບກັບເນື້ອໃນຂອງຮ່າງສົນທິສັນຍາທີ່ໄດ້ຕົກລົງໃຫ້ລົງນາມແລ້ວນັ້ນ ອົງການທີ່ສະເໜີ ຕ້ອງສະເໜີຂໍອະນຸມັດລົງນາມສົນທິສັນຍາຄືນໃໝ່ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນມາດຕາ 21 ຫາ 27 ຂອງກົດໝາຍສະບັບນີ້.

ລັດຖະບານ ຕ້ອງລາຍງານຕໍ່ສະພາແຫ່ງຊາດກ່ຽວກັບການລົງນາມສົນທິສັນຍາທີ່ພົວພັນກັບບັນຫາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ວັກ 2 ຂອງກົດໝາຍສະບັບນີ້.

**ມາດຕາ 30 ການປະສານສົມທົບກ່ອນການລົງນາມໃນເວລາຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ**

ອົງການທີ່ສະເໜີ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອກວດກາຮ່າງສົນທິສັນຍາ ພາຍຫຼັງອົງການທີ່ມີສິດໄດ້ຕົກລົງໃຫ້ລົງນາມສົນທິສັນຍາ ໃນລະຫວ່າງການຢ້ຽມຢາມຕ່າງປະເທດຂອງຄະນະຜູ້ແທນຂັ້ນສູງຂອງ ສປປ ລາວ ຫຼື ການຢ້ຽມຢາມ ສປປ ລາວ ຂອງຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດ.

ກະຊວງການຕ່າງປະເທດ ຕ້ອງປະສານສົມທົບກັບອົງການທີ່ສະເໜີ ເພື່ອທົບທວນ ແລະ ປັບປຸງຮ່າງສົນທິສັນຍາໂດຍປະສານສົມທົບກັບຝ່າຍຕ່າງປະເທດ ເພື່ອຈັດພິທີລົງນາມສົນທິສັນຍານັ້ນ, ເວັ້ນເສຍແຕ່ມີການຕົກລົງເປັນຢ່າງອື່ນຂອງອົງການທີ່ມີສິດ ຫຼື ລະຫວ່າງຝ່າຍລາວກັບພາຄີຕ່າງປະເທດ.

**ມາດຕາ 31 ການສົ່ງສົນທິສັນຍາພາຍຫຼັງການລົງນາມ**

ອົງການທີ່ສະເໜີ ຕ້ອງສົ່ງສົນທິສັນຍາສະບັບຕົ້ນ, ສົນທິສັນຍາທີ່ແປເປັນພາສາລາວ ໃນກໍລະນີ ສົນທິສັນຍາທີ່ລົງນາມຫາກເປັນພາສາຕ່າງປະເທດ, ສົນທິສັນຍາສະບັບພາສາລາວ ແລະ ພາສາຕ່າງປະເທດ ທີ່ເປັນເອເລັກໂຕຣນິກ, ໜັງສືມອບສິດ ຫຼື ໜັງສືຢັ້ງຢືນຜູ້ຕາງໜ້າຂອງພາຄີຕ່າງປະເທດ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ໃຫ້ກະຊວງການຕ່າງປະເທດ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ລົງນາມສົນທິສັນຍາຢູ່ພາຍໃນປະເທດ ຫຼື ນັບແຕ່ວັນເດີນທາງກັບມາເຖິງ ສປປ ລາວ ຂອງຄະນະຜູ້ແທນທີ່ໄປລົງນາມສົນທິສັນຍາຢູ່ຕ່າງປະເທດ.

ໃນກໍລະນີຫົວໜ້າສໍານັກງານຜູ້ຕາງໜ້າການທູດ ຫຼື ສໍານັກງານຜູ້ຕາງໜ້າຖາວອນປະຈໍາອົງການຈັດຕັ້ງສາກົນ ຫາກເປັນຜູ້ລົງນາມສົນທິສັນຍາ ຕ້ອງລາຍງານ ແລະ ສົ່ງສໍາເນົາສົນທິສັນຍາ ທີ່ໄດ້ລົງນາມນັ້ນ ໃຫ້ກະຊວງການຕ່າງປະເທດ ແລະ ສົ່ງສົນທິສັນຍາສະບັບຕົ້ນໃຫ້ອົງການທີ່ສະເໜີ. ອົງການທີ່ສະເໜີ ຕ້ອງດໍາເນີນການຕາມຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນວັກ 1 ຂອງມາດຕານີ້ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງໄດ້ຮັບສົນທິສັນຍາສະບັບຕົ້ນ.

ອົງການທີ່ສະເໜີ ຕ້ອງສົ່ງສໍາເນົາສົນທິສັນຍາພະຫຸພາຄີທີ່ໄດ້ຮັບການຢັ້ງຢືນໂດຍຜູ້ເກັບຮັກສາສົນທິສັນຍາ, ສົນທິສັນຍາທີ່ແປເປັນພາສາລາວ, ສົນທິສັນຍາສະບັບພາສາລາວ ແລະ ພາສາຕ່າງປະເທດທີ່ເປັນເອເລັກໂຕຣນິກໃຫ້ກະຊວງການຕ່າງປະເທດ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ລົງນາມສົນທິສັນຍາຢູ່ພາຍໃນປະເທດ ຫຼື ນັບແຕ່ວັນເດີນທາງກັບມາເຖິງ ສປປ ລາວ ຂອງຄະນະຜູ້ແທນທີ່ໄປລົງນາມສົນທິສັນຍາຢູ່ຕ່າງປະເທດ.

**ມາດຕາ 32 ການແລກປ່ຽນສານ**

ການແລກປ່ຽນສານ ແມ່ນ ຮູບແບບໜຶ່ງຂອງການສ້າງສົນທິສັນຍາ ເປັນຕົ້ນ ການແລກປ່ຽນໜັງສືທາງການທູດ, ຈົດໝາຍ ຫຼື ເອກະສານທີ່ໃສ່ຊື່ອື່ນ.

ການແລກປ່ຽນສານ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ແຕ່ມາດຕາ 15 ຫາ ມາດຕາ 31 ຂອງກົດໝາຍສະບັບນີ້.

## ໝວດທີ 3
## ການມອບສິດໃຫ້ເຈລະຈາ ຫຼື ລົງນາມສົນທິສັນຍາ
## ແລະ ການແຕ່ງຕັ້ງຜູ້ເຂົ້າຮ່ວມກອງປະຊຸມສາກົນ

**ມາດຕາ 33 ການມອບສິດໃຫ້ເຈລະຈາ ຫຼື ລົງນາມສົນທິສັນຍາ**

ປະທານປະເທດ ເປັນຜູ້ຕົກລົງມອບສິດເປັນລາຍລັກອັກສອນໃຫ້ຫົວໜ້າຄະນະເຈລະຈາ ຫຼື ຜູ້ຈະລົງນາມສົນທິສັນຍາໃນນາມ ສປປ ລາວ.

ນາຍົກລັດຖະມົນຕີ ເປັນຜູ້ຕົກລົງມອບສິດເປັນລາຍລັກອັກສອນໃຫ້ຫົວໜ້າຄະນະເຈລະຈາສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ.

ລັດຖະບານ ເປັນຜູ້ຕົກລົງມອບສິດເປັນລາຍລັກອັກສອນໃຫ້ຜູ້ຈະລົງນາມສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ.

ຜູ້ໄດ້ຮັບການມອບສິດເຈລະຈາ ຫຼື ລົງນາມສົນທິສັນຍາ ຕ້ອງແມ່ນຄະນະນໍາຂອງອົງການທີ່ສະເໜີ ຫຼື ແມ່ນຜູ້ທີ່ອົງການສະເໜີ ເປັນຜູ້ສະເໜີຕໍ່ອົງການທີ່ມີສິດຕົກລົງ.

ໃນກໍລະນີອົງການທີ່ສະເໜີ ຫາກບໍ່ໄດ້ບົ່ງຕົວຫົວໜ້າຄະນະເຈລະຈາ ຫຼື ຜູ້ລົງນາມສົນທິສັນຍາ, ອົງການທີ່ສະເໜີ ຕ້ອງສະເໜີຕໍ່ອົງການທີ່ມີສິດຕົກລົງ ເພື່ອມອບສິດໃຫ້ຫົວໜ້າສໍານັກງານຜູ້ຕາງໜ້າການທູດ ຫຼື ຫົວໜ້າສໍານັກງານຜູ້ຕາງໜ້າຖາວອນປະຈໍາອົງການຈັດຕັ້ງສາກົນ ຫຼື ຜູ້ຕາງໜ້າອື່ນເປັນຫົວໜ້າຄະນະເຈລະຈາ ຫຼື ເປັນຜູ້ລົງນາມສົນທິສັນຍາ.

ການອອກໜັງສືມອບສິດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 86 ຂອງກົດໝາຍສະບັບນີ້.

### ມາດຕາ 34 ການແຕ່ງຕັ້ງເຂົ້າຮ່ວມກອງປະຊຸມສາກົນ

ນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງຫົວໜ້າຄະນະຜູ້ແທນເພື່ອເຂົ້າຮ່ວມກອງປະຊຸມສາກົນ. ໃນກໍລະນີຈຳເປັນຕ້ອງແຕ່ງຕັ້ງຄະນະຜູ້ແທນເຂົ້າຮ່ວມກອງປະຊຸມສາກົນ ຕາມລະບຽບການຂອງກອງປະຊຸມ, ອົງການທີ່ສະເໜີ ຕ້ອງສະເໜີຕໍ່ກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາແຕ່ງຕັ້ງ.

ຜູ້ໄດ້ຮັບການແຕ່ງຕັ້ງໃຫ້ເຂົ້າຮ່ວມກອງປະຊຸມສາກົນ ຕ້ອງແມ່ນຄະນະນຳຂອງອົງການທີ່ສະເໜີ ຫຼື ແມ່ນຜູ້ທີ່ອົງການສະເໜີ ເປັນຜູ້ສະເໜີຕໍ່ກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາແຕ່ງຕັ້ງ.

ໃນກໍລະນີອົງການທີ່ສະເໜີ ຫາກບໍ່ໄດ້ບົ່ງຕົວຫົວໜ້າຄະນະເຂົ້າຮ່ວມກອງປະຊຸມສາກົນ ອົງການທີ່ສະເໜີ ຕ້ອງສະເໜີຕໍ່ກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາແຕ່ງຕັ້ງຫົວໜ້າສຳນັກງານຜູ້ຕາງໜ້າການທູດ ຫຼື ຫົວໜ້າສຳນັກງານຜູ້ຕາງໜ້າຖາວອນປະຈຳອົງການຈັດຕັ້ງສາກົນ ຫຼື ຜູ້ຕາງໜ້າອື່ນເປັນຫົວໜ້າຄະນະເຂົ້າຮ່ວມກອງປະຊຸມສາກົນ.

ການອອກໜັງສືແຕ່ງຕັ້ງ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 86 ຂອງກົດໝາຍສະບັບນີ້.

## ໝວດທີ 4
## ການໃຫ້ສັດຕະຍາບັນແກ່ສົນທິສັນຍາ

### ມາດຕາ 35 ການໃຫ້ສັດຕະຍາບັນ

ການໃຫ້ສັດຕະຍາບັນ ແມ່ນ ການຮັບຮອງເອົາສົນທິສັນຍາ ທີ່ ສປປ ລາວ ໄດ້ລົງນາມ ໂດຍສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ.

### ມາດຕາ 36 ສົນທິສັນຍາທີ່ຕ້ອງໃຫ້ສັດຕະຍາບັນ

ສົນທິສັນຍາທີ່ຕ້ອງໃຫ້ສັດຕະຍາບັນ ມີ ດັ່ງນີ້:

1. ສົນທິສັນຍາ ທີ່ມີບົດບັນຍັດກຳນົດໃຫ້ສັດຕະຍາບັນ;
2. ສົນທິສັນຍາໃນນາມ ສປປ ລາວ;
3. ສົນທິສັນຍາໃນນາມລັດຖະບານ ແຫ່ງ ສປປ ລາວ ທີ່ມີບົດບັນຍັດຂັດກັບກົດໝາຍ ຫຼື ມະຕິຂອງສະພາແຫ່ງຊາດ.

### ມາດຕາ 37 ການສະເໜີໃຫ້ສັດຕະຍາບັນ

ອົງການທີ່ສະເໜີ ຕ້ອງນຳເອົາເອກະສານປະກອບການສະເໜີໃຫ້ສັດຕະຍາບັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້ ສະເໜີຕໍ່ກະຊວງການຕ່າງປະເທດ.

ກະຊວງການຕ່າງປະເທດ ຕ້ອງພິຈາລະນາການສະເໜີດັ່ງກ່າວ ພາຍໃນເວລາ ສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ຈາກນັ້ນ ກະຊວງການຕ່າງປະເທດ ສະເໜີຕໍ່ນາຍົກລັດຖະມົນຕີ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາໃຫ້ສັດຕະຍາບັນແກ່ສົນທິສັນຍາ.

**ມາດຕາ 38 ເອກະສານປະກອບການສະເໜີໃຫ້ສັດຕະຍາບັນ**

ການສະເໜີໃຫ້ສັດຕະຍາບັນແກ່ສົນທິສັນຍາ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ ຂໍໃຫ້ສັດຕະຍາບັນແກ່ສົນທິສັນຍາ;

2. ບົດລາຍງານກ່ຽວກັບຄວາມເປັນມາຂອງສົນທິສັນຍາ, ການປະເມີນຜົນປະໂຫຍດ, ຜົນກະທົບຂອງສົນທິສັນຍາຕໍ່ ສປປ ລາວ;

3. ຂໍ້ສະຫງວນ, ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ, ຄຳຖະແຫຼງກ່ຽວກັບສົນທິສັນຍາພະຫຸພາຄີ;

4. ການປະຕິບັດສົນທິສັນຍາໂດຍກົງ ທັງໝົດ ຫຼື ບາງສ່ວນ; ການສະເໜີສ້າງ, ປັບປຸງ ຫຼື ຍົກເລີກກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອປະຕິບັດສົນທິສັນຍາ;

5. ຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ;

6. ບົດອະທິບາຍຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ ແລະ ມາດຕະການແກ້ໄຂ; ແຜນການຄາດຄະເນການປະຕິບັດສົນທິສັນຍາ;

7. ສຳເນົາສົນທິສັນຍາ ແລະ ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 39 ອົງການທີ່ມີສິດຕົກລົງໃຫ້ສັດຕະຍາບັນ**

ຄະນະປະຈຳສະພາແຫ່ງຊາດ ມີສິດຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາ ຕາມການສະເໜີຂອງນາຍົກລັດຖະມົນຕີ.

ສຳລັບສົນທິສັນຍາ ທີ່ພົວພັນກັບການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ເປັນຕົ້ນ ບັນຫາການເມືອງ, ຄວາມໝັ້ນຄົງ, ສົງຄາມ, ສັນຕິພາບ, ອຳນາດອະທິປະໄຕຂອງຊາດ ແລະ ຜືນແຜ່ນດິນອັນຄົບຖ້ວນ; ການສ້າງຕັ້ງ, ການເຂົ້າຮ່ວມ ແລະ ການຖອນຕົວອອກຈາກການເປັນສະມາຊິກຂອງອົງການຈັດຕັ້ງສາກົນ ຊຶ່ງສົ່ງຜົນກະທົບຕໍ່ນະໂຍບາຍອັນເປັນພື້ນຖານດ້ານການຕ່າງປະເທດຂອງຊາດ, ຄວາມໝັ້ນຄົງ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ການເງິນ ແລະ ເງິນຕາ, ບັນຫາທີ່ພາໃຫ້ເກີດການປ່ຽນແປງ, ຈຳກັດ ຫຼື ຍົກເລີກສິດທິມະນຸດ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ; ບັນຫາທີ່ຂັດກັບກົດໝາຍ ຫຼື ມະຕິຂອງສະພາແຫ່ງຊາດນັ້ນ ຄະນະປະຈຳສະພາແຫ່ງຊາດຕ້ອງພິຈາລະນານຳສະເໜີບັນຫາດັ່ງກ່າວເຂົ້າໃນກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາ.

**ມາດຕາ 40 ການກວດກາກ່ອນການໃຫ້ສັດຕະຍາບັນ**

ກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ເປັນເສນາທິການໃຫ້ຄະນະປະຈຳສະພາແຫ່ງຊາດໃນການປະສານສົມທົບກັບກຳມາທິການອື່ນທີ່ກ່ຽວຂ້ອງ ເພື່ອກວດກາສົນທິສັນຍາພາຍ

ໃນເວລາ ຫົກສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ ກ່ອນນຳເຂົ້າພິຈາລະນາຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຫຼື ກອງປະຊຸມສະພາແຫ່ງຊາດ.

**ມາດຕາ 41 ເນື້ອໃນການກວດກາກ່ອນການໃຫ້ສັດຕະຍາບັນ**

ເນື້ອໃນການກວດກາກ່ອນການໃຫ້ສັດຕະຍາບັນ ມີ ດັ່ງນີ້:

1. ຄວາມຈຳເປັນໃນການໃຫ້ສັດຕະຍາບັນແກ່ສົນທິສັນຍາ;

2. ການປະຕິບັດຕາມລະບຽບການສະເໜີໃຫ້ສັດຕະຍາບັນແກ່ສົນທິສັນຍາ;

3. ການກວດກາຄວາມສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ລັດຖະບັນຍັດ;

4. ຄວາມເປັນໄປໄດ້ໃນການປະຕິບັດສົນທິສັນຍາໂດຍກົງ ທັງໝົດ ຫຼື ບາງສ່ວນ ລວມທັງແຜນການຄາດຄະເນການປະຕິບັດສົນທິສັນຍາ;

5. ຄວາມຈຳເປັນໃນການສ້າງ, ປັບປຸງ ຫຼື ຍົກເລີກກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ລັດຖະບັນຍັດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ເພື່ອປະຕິບັດສົນທິສັນຍາ.

**ມາດຕາ 42 ການພິຈາລະນາໃຫ້ສັດຕະຍາບັນແກ່ສົນທິສັນຍາຂອງຄະນະປະຈຳສະພາແຫ່ງຊາດ**

ກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ສະເໜີຜົນຂອງການກວດກາສົນທິສັນຍາ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາໃຫ້ສັດຕະຍາບັນ ໂດຍມີການເຂົ້າຮ່ວມຂອງກະຊວງການຕ່າງປະເທດ, ອົງການທີ່ສະເໜີ ແລະ ອົງການອື່ນທີ່ກ່ຽວຂ້ອງ. ຄະນະປະຈຳສະພາແຫ່ງຊາດ ໃຫ້ສັດຕະຍາບັນແກ່ສົນທິສັນຍາ ໂດຍການອອກມະຕິ.

ສຳລັບການພິຈາລະນາບັນຫາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ວັກ 2 ຂອງກົດໝາຍສະບັບນີ້ ຄະນະປະຈຳສະພາແຫ່ງຊາດ ຕ້ອງນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ ກ່ອນການອອກມະຕິໃຫ້ສັດຕະຍາບັນ.

**ມາດຕາ 43 ເນື້ອໃນມະຕິໃຫ້ສັດຕະຍາບັນ**

ມະຕິໃຫ້ສັດຕະຍາບັນແກ່ສົນທິສັນຍາ ມີເນື້ອໃນ ດັ່ງນີ້:

1. ຊື່, ວັນເວລາ ແລະ ສະຖານທີ່ລົງນາມສົນທິສັນຍາທີ່ໃຫ້ສັດຕະຍາບັນ;

2. ຂອບເຂດຄວາມຮັບຜິດຊອບຂອງອົງການທີ່ສະເໜີ, ຂອງກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງໃນການປະຕິບັດສົນທິສັນຍາ;

3. ການຕົກລົງປະຕິບັດສົນທິສັນຍາໂດຍກົງ ທັງໝົດ ຫຼື ບາງສ່ວນ; ການຕົກລົງ ຫຼື ການສະເໜີສ້າງ, ປັບປຸງ ຫຼື ຍົກເລີກ ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດ ເພື່ອປະຕິບັດສົນທິສັນຍາ;

4. ຂໍ້ສະຫງວນ, ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ, ຄຳຖະແຫຼງກ່ຽວກັບສົນທິສັນຍາພະຫຸພາຄີ ແລະ ບັນຫາອື່ນທີ່ຈຳເປັນ.

**ມາດຕາ 44 ການປະກາດໃຫ້ສັດຕະຍາບັນ**

ພາຍຫຼັງທີ່ສະພາແຫ່ງຊາດ ໄດ້ຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາແລ້ວ, ຄະນະປະຈຳສະພາແຫ່ງຊາດ ຕ້ອງສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາອອກລັດຖະດຳລັດປະກາດການໃຫ້ສັດຕະຍາບັນ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ຈາກນັ້ນຫ້ອງວ່າການປະທານປະເທດ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອດຳເນີນການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 87 ຂອງກົດໝາຍສະບັບນີ້.

## ໝວດທີ 5
## ການຮັບຮອງສົນທິສັນຍາ

**ມາດຕາ 45 ການຮັບຮອງສົນທິສັນຍາ**

ການຮັບຮອງສົນທິສັນຍາ ແມ່ນ ການຮັບປະຕິບັດສົນທິສັນຍາ ທີ່ ສປປ ລາວ ໄດ້ລົງນາມໂດຍລັດຖະບານ.

**ມາດຕາ 46 ສົນທິສັນຍາທີ່ຕ້ອງຮັບຮອງ**

ສົນທິສັນຍາທີ່ຕ້ອງຮັບຮອງ ມີ ດັ່ງນີ້:

1. ສົນທິສັນຍາໃນນາມລັດຖະບານ ຊຶ່ງມີບົດບັນຍັດທີ່ກຳນົດໃຫ້ຮັບຮອງ ຫຼື ກຳນົດໃຫ້ສຳເລັດຂັ້ນຕອນທາງກົດໝາຍພາຍໃນຂອງແຕ່ລະປະເທດເພື່ອເຮັດໃຫ້ສົນທິສັນຍາມີຜົນສັກສິດ;

2. ສົນທິສັນຍາໃນນາມລັດຖະບານ ຊຶ່ງມີບົດບັນຍັດທີ່ຂັດກັບນິຕິກຳຂອງລັດຖະບານ.

**ມາດຕາ 47 ການສະເໜີໃຫ້ຮັບຮອງສົນທິສັນຍາ**

ອົງການທີ່ສະເໜີ ຕ້ອງນຳເອົາເອກະສານປະກອບການສະເໜີຮັບຮອງສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້ ສະເໜີຕໍ່ກະຊວງການຕ່າງປະເທດ.

ກະຊວງການຕ່າງປະເທດ ຕ້ອງພິຈາລະນາການສະເໜີດັ່ງກ່າວ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ຈາກນັ້ນ ກະຊວງການຕ່າງປະເທດ ກໍສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງ.

**ມາດຕາ 48 ເອກະສານປະກອບການສະເໜີຮັບຮອງສົນທິສັນຍາ**

ການສະເໜີຮັບຮອງສົນທິສັນຍາ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ ໃຫ້ຮັບຮອງສົນທິສັນຍາ;

2. ບົດລາຍງານກ່ຽວກັບຄວາມເປັນມາຂອງສົນທິສັນຍາ, ການປະເມີນຜົນປະໂຫຍດ, ຜົນກະທົບຂອງ ສົນທິສັນຍາຕໍ່ ສປປ ລາວ;

3. ຂໍ້ສະຫງວນ, ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ, ຄຳຖະແຫຼງກ່ຽວກັບສົນທິສັນຍາພະຫຸພາຄີ;

4. ການປະຕິບັດສົນທິສັນຍາໂດຍກົງ ທັງໝົດ ຫຼື ບາງສ່ວນ; ການສະເໜີສ້າງ, ປັບປຸງ ຫຼື ຍົກເລີກ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອປະຕິບັດສົນທິສັນຍາ;

5. ຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ;

6. ບົດອະທິບາຍຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ ແລະ ມາດຕະການແກ້ໄຂ; ແຜນການຄາດຄະເນການປະຕິບັດສົນທິສັນຍາ;

7. ສຳເນົາສົນທິສັນຍາ ແລະ ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 49 ອົງການທີ່ມີສິດຕົກລົງຮັບຮອງ**

ລັດຖະບານ ແຫ່ງ ສປປ ລາວ ມີສິດຕົກລົງຮັບຮອງສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້.

**ມາດຕາ 50 ເນື້ອໃນມະຕິຮັບຮອງ**

ເນື້ອໃນມະຕິຮັບຮອງສົນທິສັນຍາຂອງລັດຖະບານ ແມ່ນ ຄືກັນກັບເນື້ອໃນມະຕິໃຫ້ສັດຕະຍາບັນແກ່ສົນທິສັນຍາຂອງຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້.

## ໝວດທີ 6
## ການເຂົ້າຮ່ວມເປັນພາຄີສົນທິສັນຍາ

**ມາດຕາ 51 ການເຂົ້າຮ່ວມເປັນພາຄີສົນທິສັນຍາ**

ການເຂົ້າຮ່ວມເປັນພາຄີສົນທິສັນຍາ ແມ່ນ ການປະຕິບັດຕາມກົດໝາຍ ໂດຍສະພາແຫ່ງຊາດ ຫຼື ລັດຖະບານ ເພື່ອຕາງໜ້າ ສປປ ລາວ ໃນການຮັບປະຕິບັດສົນທິສັນຍາພະຫຸພາຄີ ໃນກໍລະນີທີ່ ສປປ ລາວ ບໍ່ໄດ້ລົງນາມສົນທິສັນຍານັ້ນ ໂດຍບໍ່ຂຶ້ນກັບວ່າສົນທິສັນຍາດັ່ງກ່າວມີຜົນສັກສິດ ແລ້ວ ຫຼື ຍັງ.

**ມາດຕາ 52 ການສະເໜີເຂົ້າຮ່ວມເປັນພາຄີສົນທິສັນຍາ**

ອົງການທີ່ສະເໜີ ຕ້ອງນຳເອົາເອກະສານປະກອບການສະເໜີເຂົ້າຮ່ວມເປັນພາຄີສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້ ສະເໜີຕໍ່ກະຊວງການຕ່າງປະເທດ.

ກະຊວງການຕ່າງປະເທດ ຕ້ອງພິຈາລະນາການສະເໜີດັ່ງກ່າວ ພາຍໃນເວລາ ສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ຈາກນັ້ນ ກະຊວງການຕ່າງປະເທດ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາການເຂົ້າຮ່ວມເປັນພາຄີສົນທິສັນຍາ ທີ່ລັດຖະບານມີສິດຕົກລົງຮັບຮອງ.

ສຳລັບສົນທິສັນຍາ ທີ່ສະພາແຫ່ງຊາດມີສິດຕົກລົງໃຫ້ສັດຕະຍາບັນນັ້ນ ລັດຖະບານຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ.

ການເຈລະຈາ, ການລົງນາມ, ການໃຫ້ສັດຕະຍາບັນ ຫຼື ການຮັບຮອງສົນທິສັນຍາໃໝ່ເພື່ອເຂົ້າຮ່ວມເປັນພາຄີສົນທິສັນຍາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຫາ ມາດຕາ 50 ຂອງກົດໝາຍສະບັບນີ້.

**ມາດຕາ 53 ເອກະສານປະກອບການສະເໜີເຂົ້າຮ່ວມເປັນພາຄີສົນທິສັນຍາ**

ການສະເໜີເຂົ້າຮ່ວມເປັນພາຄີສົນທິສັນຍາ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ ທີ່ມີເນື້ອໃນຄືກັນກັບໜັງສືສະເໜີຂໍອະນຸມັດລົງນາມສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;

2. ຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ;

3. ບົດອະທິບາຍຄຳເຫັນຂອງອົງການທີ່ກ່ຽວຂ້ອງ ແລະ ແຜນການຄາດຄະເນການປະຕິບັດສົນທິສັນຍາ;

4. ສຳເນົາສົນທິສັນຍາສະບັບທີ່ເປັນພາສາຕ່າງປະເທດ ແລະ ສະບັບທີ່ແປເປັນພາສາລາວ;

5. ບັນຊີລາຍຊື່ປະເທດພາຄີຂອງສົນທິສັນຍາ, ເອກະສານປັບປຸງສົນທິສັນຍາ, ຂໍ້ສະຫງວນ, ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນ, ຄຳຖະແຫຼງຂອງພາຄີຕ່າງປະເທດກ່ຽວກັບສົນທິສັນຍານັ້ນ, ຂັ້ນຕອນທາງດ້ານກົດໝາຍທີ່ຈຳເປັນ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງກັບການເຂົ້າຮ່ວມເປັນພາຄີສົນທິສັນຍາ.

**ມາດຕາ 54 ອົງການທີ່ມີສິດຕົກລົງເຂົ້າຮ່ວມເປັນພາຄີ**

ອົງການທີ່ມີສິດຕົກລົງເຂົ້າຮ່ວມເປັນພາຄີສົນທິສັນຍາ ມີ ດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ;

2. ລັດຖະບານ.

**ມາດຕາ 55 ການພິຈາລະນາເຂົ້າຮ່ວມເປັນພາຄີ**

ການພິຈາລະນາເຂົ້າຮ່ວມເປັນພາຄີສົນທິສັນຍາໂດຍຄະນະປະຈຳສະພາແຫ່ງຊາດ ໃຫ້ປະຕິບັດຄືກັນກັບການພິຈາລະນາໃຫ້ສັດຕະຍາບັນສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້.

ສຳລັບການພິຈາລະນາເຂົ້າຮ່ວມເປັນພາຄີສົນທິສັນຍາໂດຍລັດຖະບານນັ້ນ ໃຫ້ປະຕິບັດຄືກັນກັບການພິຈາລະນາຮັບຮອງສົນທິສັນຍາ.

ລັດຖະບານ ຕ້ອງສະເໜີຂໍຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ໃນກໍລະນີສົນທິສັນຍາໃນນາມລັດຖະບານທີ່ຈະເຂົ້າຮ່ວມເປັນພາຄີ ຫາກມີບົດບັນຍັດແຕກຕ່າງກັນ ຫຼື ບໍ່ໄດ້ກຳນົດໄວ້ໃນກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ຫຼື ລັດຖະບັນຍັດ ຫຼື ມີຄວາມຈຳເປັນຕ້ອງສ້າງ, ປັບປຸງ ຫຼື ຍົກເລີກ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ຫຼື ລັດຖະບັນຍັດ ເພື່ອປະຕິບັດສົນທິສັນຍາ.

**ມາດຕາ 56 ເນື້ອໃນມະຕິເຂົ້າຮ່ວມເປັນພາຄີ**

ມະຕິເຂົ້າຮ່ວມເປັນພາຄີສົນທິສັນຍາ ມີເນື້ອໃນຄືກັນກັບເນື້ອໃນມະຕິໃຫ້ສັດຕະຍາບັນ ຫຼື ເນື້ອໃນມະຕິຮັບຮອງສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ແລະ ມາດຕາ 50 ຂອງກົດໝາຍສະບັບນີ້.

**ມາດຕາ 57 ການປະກາດເຂົ້າຮ່ວມເປັນພາຄີ**

ພາຍຫຼັງທີ່ສະພາແຫ່ງຊາດ ໄດ້ຕົກລົງເຂົ້າຮ່ວມເປັນພາຄີສົນທິສັນຍາແລ້ວ, ຄະນະປະຈຳສະພາແຫ່ງຊາດ ຕ້ອງສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາອອກລັດຖະດຳລັດປະກາດການເຂົ້າຮ່ວມເປັນພາຄີສົນທິສັນຍາ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ຈາກນັ້ນ ຫ້ອງວ່າການປະທານປະເທດ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອດຳເນີນການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 87 ຂອງກົດໝາຍສະບັບນີ້.

## ໝວດທີ 7
## ລະບຽບການເລັ່ງລັດກ່ຽວກັບການສ້າງສົນທິສັນຍາ

**ມາດຕາ 58 ການນຳໃຊ້ລະບຽບການເລັ່ງລັດ**

ລະບຽບການເລັ່ງລັດສຳລັບການສ້າງສົນທິສັນຍາໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນໝວດນີ້.

ລະບຽບການເລັ່ງລັດສຳລັບການເຈລະຈາ, ລົງນາມ, ປັບປຸງ, ຕໍ່ອາຍຸສົນທິສັນຍາ ບໍ່ສາມາດນຳໃຊ້ກັບສົນທິສັນຍາທີ່ຢູ່ໃນຂອບເຂດສິດຕົກລົງໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີຂອງສະພາແຫ່ງຊາດ.

ການສ້າງສົນທິສັນຍາໃນນາມລັດຖະບານ ກ່ຽວກັບການກູ້ຢືມເງິນຕ່າງປະເທດໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 59 ສົນທິສັນຍາທີ່ສາມາດນຳໃຊ້ລະບຽບການເລັ່ງລັດ**

ສົນທິສັນຍາທີ່ສາມາດນຳໃຊ້ລະບຽບການເລັ່ງລັດ ມີ ດັ່ງນີ້:

1. ສົນທິສັນຍາຕາມຮູບແບບທີ່ ສປປ ລາວ ແລະ ພາຄີຕ່າງປະເທດ ໄດ້ຮ່ວມກັນກຳນົດໄວ້ ຫຼື ສົນທິສັນຍາຕາມຮູບແບບທີ່ອົງການທີ່ມີສິດໄດ້ຮັບຮອງ;

2. ສົນທິສັນຍາ ຕາມການຕົກລົງຂອງອົງການທີ່ມີສິດ.

ລະບຽບການເລັ່ງລັດ ສຳລັບການເຈລະຈາ ແລະ ລົງນາມສົນທິສັນຍາ ມີ ດັ່ງນີ້:

1. ອົງການ ທີ່ປະກອບຄຳເຫັນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂໍ້ 4 ຂອງກົດໝາຍສະບັບນີ້ ຕ້ອງແຈ້ງຄຳເຫັນຂອງຕົນເປັນລາຍລັກອັກສອນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ;

2. ເອກະສານປະກອບໃນການສະເໜີຂໍອະນຸມັດລົງນາມສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້;

**ມາດຕາ 60 ການສະເໜີເຈລະຈາ ແລະ ລົງນາມສົນທິສັນຍາພ້ອມກັນ**

ການສະເໜີເຈລະຈາ ແລະ ລົງນາມສົນທິສັນຍາ ສາມາດປະຕິບັດພ້ອມກັນໄດ້ ໃນກໍລະນີອົງການທີ່ສະເໜີ ຫາກສາມາດຢັ້ງຢືນເນື້ອໃນ ຫຼື ລວບລວມເອກະສານທີ່ຈຳເປັນຢ່າງຄົບຖ້ວນ ເພື່ອສະເໜີຂໍອະນຸມັດການລົງນາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

**ມາດຕາ 61 ການປັບປຸງສົນທິສັນຍາຕາມລະບຽບການເລັ່ງລັດ**

ໃນການປັບປຸງສົນທິສັນຍາທີ່ມີລັກສະນະເຕັກນິກ ໂດຍບໍ່ມີການສ້າງສົນທິສັນຍາສະບັບໃໝ່ ອົງການທີ່ສະເໜີ ຕ້ອງສະເໜີຕໍ່ກະຊວງການຕ່າງປະເທດ ໂດຍບໍ່ຈຳເປັນຕ້ອງຂໍຄຳເຫັນຈາກອົງການອື່ນທີ່ກ່ຽວຂ້ອງ ເພື່ອນຳສະເໜີຕໍ່ລັດຖະບານພິຈາລະນາ. ໃນກໍລະນີຈຳເປັນຕ້ອງຂໍຄຳເຫັນ ຕ້ອງແຈ້ງຄຳເຫັນເປັນລາຍລັກອັກສອນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ໃນກໍລະນີສົນທິສັນຍາ ຫາກໄດ້ກຳນົດອົງການທີ່ມີສິດປັບປຸງ ກໍໃຫ້ອົງການນັ້ນເປັນຜູ້ຕົກລົງປັບປຸງສົນທິສັນຍາ ເວັ້ນເສຍແຕ່ລັດຖະບານຫາກໄດ້ຕົກລົງເປັນຢ່າງອື່ນ.

ໃນກໍລະນີທີ່ໄດ້ກຳນົດໃນວັກ 2 ຂອງມາດຕານີ້, ອົງການທີ່ມີສິດຕົກລົງປັບປຸງສົນທິສັນຍາ ຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງຊາບກ່ຽວກັບເນື້ອໃນການປັບປຸງ.

ເອກະສານປະກອບໃນການສະເໜີປັບປຸງສົນທິສັນຍາໄດ້ກຳນົດໄວ້ໃນມາດຕາ 73 ຂໍ້ 1, 3 ແລະ 4 ຂອງກົດໝາຍສະບັບນີ້.

**ມາດຕາ 62 ການຕໍ່ອາຍຸສົນທິສັນຍາຕາມລະບຽບການເລັ່ງລັດ**

ໃນການຕໍ່ອາຍຸສົນທິສັນຍາທີ່ມີລັກສະນະເຕັກນິກ ອົງການທີ່ສະເໜີ ຕ້ອງສະເໜີຕໍ່ກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ລັດຖະບານພິຈາລະນາ ໂດຍບໍ່ຈຳເປັນຕ້ອງຂໍຄຳເຫັນຈາກອົງການອື່ນທີ່ກ່ຽວຂ້ອງ.

ເອກະສານປະກອບໃນການສະເໜີຕໍ່ອາຍຸສົນທິສັນຍາ ໄດ້ກຳນົດໄວ້ໃນມາດຕາ 73 ຂໍ້ 1, 3 ແລະ 4 ຂອງກົດໝາຍສະບັບນີ້.

**ມາດຕາ 63 ການປະຕິເສດນຳໃຊ້ລະບຽບການເລັ່ງລັດ**

ອົງການທີ່ມີສິດຕົກລົງໃຫ້ເຈລະຈາ, ລົງນາມ, ປັບປຸງ, ຕໍ່ອາຍຸສົນທິສັນຍາ ມີສິດປະຕິເສດການນຳໃຊ້ລະບຽບການເລັ່ງລັດ.

## ໝວດທີ 8
## ຂໍ້ສະຫງວນ

**ມາດຕາ 64 ຂໍ້ສະຫງວນ**

ຂໍ້ສະຫງວນ ແມ່ນ ຄຳຖະແຫຼງທີ່ເປັນລາຍລັກອັກສອນຂອງ ສປປ ລາວ ຫຼື ຂອງພາຄີຕ່າງປະເທດທີ່ສ້າງຂຶ້ນໃນເວລາລົງນາມ, ໃຫ້ສັດຕະຍາບັນ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີສົນທິສັນຍາພະຫຸພາຄີ ເພື່ອຍົກເວັ້ນ ຫຼື ປ່ຽນແປງຜົນສັກສິດທາງດ້ານກົດໝາຍຂອງບົດບັນຍັດໃດໜຶ່ງຂອງສົນທິສັນຍາ.

**ມາດຕາ 65 ອົງການທີ່ມີສິດຕົກລົງໃຫ້ສ້າງຂໍ້ສະຫງວນ**

ອົງການທີ່ມີສິດຕົກລົງໃຫ້ສ້າງຂໍ້ສະຫງວນ ມີ ດັ່ງນີ້:

1. ຄະນະປະຈໍາສະພາແຫ່ງຊາດ ມີສິດຕົກລົງໃຫ້ສ້າງຂໍ້ສະຫງວນຂອງ ສປປ ລາວ ສໍາລັບສົນທິສັນຍາທີ່ຄະນະປະຈໍາສະພາແຫ່ງຊາດເປັນຜູ້ຕົກລົງໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມ ເປັນພາຄີຕາມການສະເໜີຂອງນາຍົກລັດຖະມົນຕີ;

2. ລັດຖະບານ ມີສິດຕົກລົງໃຫ້ສ້າງຂໍ້ສະຫງວນຂອງ ສປປ ລາວ ສໍາລັບສົນທິສັນຍາ ທີ່ລັດຖະບານເປັນຜູ້ຕົກລົງໃຫ້ລົງນາມ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີ.

ສໍາລັບຂໍ້ສະຫງວນຂອງສົນທິສັນຍາທີ່ພົວພັນກັບບັນຫາ ຕາມທີ່ໄດ້ກໍານົດໃນມາດຕາ 39 ວັກ 2 ຂອງກົດໝາຍສະບັບນີ້ ໃຫ້ສະພາແຫ່ງຊາດເປັນຜູ້ພິຈາລະນາ.

**ມາດຕາ 66 ການຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ**

ອົງການທີ່ສະເໜີ ຕ້ອງສະເໜີຕໍ່ກະຊວງການຕ່າງປະເທດ ເພື່ອຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ພ້ອມທັງເຫດຜົນ ແລະ ຄວາມຈໍາເປັນໃນເວລາສະເໜີ ໃຫ້ສັດຕະຍາບັນ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີສົນທິສັນຍາ.

ໃນກໍລະນີພາຄີຕ່າງປະເທດ ສ້າງຂໍ້ສະຫງວນ ພາຍຫຼັງທີ່ໄດ້ສະເໜີຕໍ່ລັດຖະບານກ່ຽວກັບການລົງນາມ, ການໃຫ້ສັດຕະຍາບັນ, ການຮັບຮອງ ຫຼື ການເຂົ້າຮ່ວມເປັນພາຄີສົນທິສັນຍາ, ກະຊວງການຕ່າງປະເທດ ຕ້ອງແຈ້ງໃຫ້ອົງການທີ່ສະເໜີຊາບທັນທີ ເພື່ອສະເໜີການຮັບຮູ້ ຫຼື ຄັດຄ້ານເພີ່ມເຕີມ.

ການສະເໜີເພີ່ມເຕີມກ່ຽວກັບການຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດຕາມທີ່ໄດ້ກໍານົດໃນວັກ 2 ຂອງມາດຕານີ້ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ ທີ່ມີເນື້ອໃນຕາມທີ່ໄດ້ກໍານົດໃນວັກ 1 ຂອງມາດຕານີ້;
2. ສໍາເນົາສົນທິສັນຍາ;
3. ຄໍາເຫັນຂອງອົງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 67 ອົງການທີ່ມີສິດຕົກລົງຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ**

ອົງການທີ່ມີສິດຕົກລົງຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ມີ ດັ່ງນີ້:

1. ຄະນະປະຈໍາສະພາແຫ່ງຊາດ ມີສິດຕົກລົງຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ສໍາລັບສົນທິສັນຍາທີ່ຄະນະປະຈໍາສະພາແຫ່ງຊາດເປັນຜູ້ຕົກລົງໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີ;

2. ລັດຖະບານ ມີສິດຕົກລົງຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ສໍາລັບສົນທິສັນຍາ ທີ່ລັດຖະບານເປັນຜູ້ຕົກລົງໃຫ້ລົງນາມ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີ.

**ມາດຕາ 68 ການຕົກລົງຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ**

ຄະນະປະຈຳສະພາແຫ່ງຊາດ ຕົກລົງຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ໃນເວລາຕົກລົງໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີສົນທິສັນຍາ ຫຼື ພາຍຫຼັງທີ່ໄດ້ຮັບການສະເໜີ ເພີ່ມເຕີມ ກ່ຽວກັບການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ.

ລັດຖະບານ ຕົກລົງຮັບຮູ້ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດໃນເວລາຕົກລົງໃຫ້ ລົງນາມ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີສົນທິສັນຍາ ຫຼື ພາຍຫຼັງໄດ້ຮັບການສະເໜີເພີ່ມເຕີມກ່ຽວກັບ ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ.

ສຳລັບການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ທີ່ພົວພັນກັບບັນຫາ ຕາມທີ່ໄດ້ກຳນົດໃນມາດຕາ 39 ວັກ 2 ຂອງກົດໝາຍສະບັບນີ້ ໃຫ້ສະພາແຫ່ງຊາດເປັນຜູ້ພິຈາລະນາ.

**ມາດຕາ 69 ການຖອນຂໍ້ສະຫງວນ ຫຼື ການຖອນການຄັດຄ້ານຂໍ້ສະຫງວນ**

ອົງການທີ່ສະເໜີ ຕ້ອງສະເໜີຕໍ່ກະຊວງການຕ່າງປະເທດກ່ຽວກັບການຖອນຂໍ້ສະຫງວນ ຫຼື ການຖອນການຄັດຄ້ານຂໍ້ສະຫງວນ ພ້ອມທັງຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ.

ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງຖອນຂໍ້ສະຫງວນ ຫຼື ຖອນການຄັດຄ້ານ ຂໍ້ສະຫງວນທີ່ຕົນໄດ້ຕົກລົງສ້າງ ຫຼື ຄັດຄ້ານ ຕາມການສະເໜີຂອງນາຍົກລັດຖະມົນຕີ.

ລັດຖະບານ ພິຈາລະນາຕົກລົງຖອນຂໍ້ສະຫງວນ ຫຼື ຖອນການຄັດຄ້ານຂໍ້ສະຫງວນທີ່ຕົນ ໄດ້ຕົກລົງສ້າງ ຫຼື ຄັດຄ້ານ.

ສຳລັບການຖອນຂໍ້ສະຫງວນ ຫຼື ການຖອນການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ທີ່ພົວພັນກັບບັນຫາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ວັກ 2 ຂອງກົດໝາຍສະບັບນີ້ ໃຫ້ສະພາແຫ່ງ ຊາດ ເປັນຜູ້ພິຈາລະນາ.

ການສະເໜີຖອນຂໍ້ສະຫງວນ ຫຼື ຖອນການຄັດຄ້ານຂໍ້ສະຫງວນ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ, ບົດລາຍງານກ່ຽວກັບຜົນກະທົບທາງດ້ານກົດໝາຍ ຈາກການຖອນຂໍ້ສະ ຫງວນ ຫຼື ການຖອນການຄັດຄ້ານຂໍ້ສະຫງວນ;
2. ຄຳເຫັນຂອງອົງການອື່ນທີ່ກ່ຽວຂ້ອງ;
3. ສຳເນົາສົນທິສັນຍາ.

## ໝວດທີ 9
## ຜົນສັກສິດ, ການປັບປຸງ ຫຼື ຕໍ່ອາຍຸ, ການຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາ

**ມາດຕາ 70 ຜົນສັກສິດຂອງສົນທິສັນຍາ**

ສົນທິສັນຍາມີຜົນສັກສິດ ສຳລັບ ສປປ ລາວ ຕາມບົດບັນຍັດທີ່ໄດ້ກຳນົດໄວ້ໃນສົນທິສັນ ຍານັ້ນ ຫຼື ຕາມການຕົກລົງລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ.

### ມາດຕາ 71 ການປະຕິບັດຊົ່ວຄາວ

ສົນທິສັນຍາທັງໝົດ ຫຼື ບາງສ່ວນ ອາດນຳມາປະຕິບັດຊົ່ວຄາວ ໃນເວລາດຳເນີນຂັ້ນຕອນເພື່ອເຮັດໃຫ້ສົນທິສັນຍາມີຜົນສັກສິດ ຕາມບົດບັນຍັດຂອງສົນທິສັນຍານັ້ນ ຫຼື ຕາມການຕົກລົງລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ.

ການປະຕິບັດຊົ່ວຄາວສົນທິສັນຍາ ຈະຖືກຍົກເລີກໃນກໍລະນີຝ່າຍລາວໄດ້ແຈ້ງໃຫ້ພາຄີຕ່າງປະເທດຊາບ ຫຼື ພາຄີຕ່າງປະເທດໄດ້ແຈ້ງໃຫ້ຝ່າຍລາວຊາບກ່ຽວກັບການຍົກເລີກການປະຕິບັດຊົ່ວຄາວສົນທິສັນຍານັ້ນ. ເວັ້ນເສຍແຕ່ສົນທິສັນຍາ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ ຫຼື ຝ່າຍລາວ ແລະ ພາຄີຕ່າງປະເທດ ໄດ້ຕົກລົງເປັນຢ່າງອື່ນ.

ອົງການທີ່ມີສິດຕົກລົງໃຫ້ລົງນາມສົນທິສັນຍາ ມີສິດຕົກລົງ ຫຼື ຍົກເລີກການປະຕິບັດຊົ່ວຄາວສົນທິສັນຍາ.

ເອກະສານປະກອບໃນການສະເໜີຍົກເລີກການປະຕິບັດຊົ່ວຄາວສົນທິສັນຍາ ແມ່ນຄືກັນກັບເອກະສານປະກອບໃນການສະເໜີຂໍອະນຸມັດລົງນາມສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້.

### ມາດຕາ 72 ການປັບປຸງ ຫຼື ການຕໍ່ອາຍຸ

ການປັບປຸງ ຫຼື ການຕໍ່ອາຍຸສົນທິສັນຍາໃຫ້ປະຕິບັດຕາມບົດບັນຍັດທີ່ໄດ້ກຳນົດໄວ້ໃນສົນທິສັນຍານັ້ນ ຫຼື ຕາມການຕົກລົງລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ.

ອົງການທີ່ສະເໜີ ຕ້ອງສະເໜີຕໍ່ກະຊວງການຕ່າງປະເທດ ເພື່ອປັບປຸງ ຫຼື ຕໍ່ອາຍຸ ພ້ອມດ້ວຍເອກະສານທີ່ໄດ້ກຳນົດໄວ້ໃນມາດຕາ 73 ຂອງກົດໝາຍສະບັບນີ້. ກະຊວງການຕ່າງປະເທດ ຕ້ອງພິຈາລະນາການສະເໜີດັ່ງກ່າວ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ. ຈາກນັ້ນ ກະຊວງການຕ່າງປະເທດ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາທີ່ລັດຖະບານເປັນຜູ້ຕົກລົງໃຫ້ລົງນາມ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີ. ສຳລັບການປັບປຸງ ຫຼື ການຕໍ່ອາຍຸສົນທິສັນຍາທີ່ສະພາແຫ່ງຊາດເປັນຜູ້ຕົກລົງໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມ ເປັນພາຄີນັ້ນ ລັດຖະບານ ຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ.

ການສ້າງສົນທິສັນຍາສະບັບໃໝ່ເພື່ອປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຫາ ມາດຕາ 50 ຂອງກົດໝາຍສະບັບນີ້.

### ມາດຕາ 73 ເອກະສານປະກອບການສະເໜີປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາ

ການສະເໜີປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາຕ້ອງ ມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ ທີ່ກຳນົດຈຸດປະສົງ, ຄວາມຈຳເປັນ, ພື້ນຖານທາງດ້ານກົດໝາຍ ແລະ ຜົນທາງດ້ານກົດໝາຍທີ່ເນື່ອງມາຈາກການປັບປຸງ ຫຼື ການຕໍ່ອາຍຸສົນທິສັນຍາ;
2. ບົດອະທິບາຍຄຳເຫັນຂອງອົງການທີ່ກ່ຽວຂ້ອງ ແລະ ມາດຕະການແກ້ໄຂ;
3. ສຳເນົາສົນທິສັນຍາ;

4. ໜັງສືສະເໜີກ່ຽວກັບການປັບປຸງ ຫຼື ການຕໍ່ອາຍຸສົນທິສັນຍາຂອງພາຄີຕ່າງປະເທດ ຫຼື ຂອງອົງການທີ່ກ່ຽວຂ້ອງຂອງລາວ.

**ມາດຕາ 74 ອົງການທີ່ມີສິດຕົກລົງປັບປຸງ ຫຼື ຕໍ່ອາຍຸ**

ອົງການທີ່ມີສິດຕົກລົງປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາ ມີ ດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ ມີສິດຕົກລົງປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາ ທີ່ຄະນະປະຈຳສະພາແຫ່ງຊາດເປັນຜູ້ຕົກລົງໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີຕາມການສະເໜີຂອງນາຍົກລັດຖະມົນຕີ.

2. ລັດຖະບານ ມີສິດຕົກລົງປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາທີ່ລັດຖະບານເປັນຜູ້ຕົກລົງໃຫ້ລົງນາມ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີ.

**ມາດຕາ 75 ການພິຈາລະນາປັບປຸງ ຫຼື ຕໍ່ອາຍຸ**

ຄະນະປະຈຳສະພາແຫ່ງຊາດ ພິຈາລະນາປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາ ໂດຍປະຕິບັດຕາມລະບຽບການພິຈາລະນາການໃຫ້ສັດຕະຍາບັນແກ່ສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້.

ລັດຖະບານ ພິຈາລະນາປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາ ໂດຍປະຕິບັດຕາມລະບຽບການພິຈາລະນາການຮັບຮອງສົນທິສັນຍາ.

ສະພາແຫ່ງຊາດ ເປັນຜູ້ພິຈາລະນາກ່ຽວກັບການປັບປຸງ ຫຼື ການຕໍ່ອາຍຸສົນທິສັນຍາທີ່ພົວພັນກັບບັນຫາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ວັກ 2 ຂອງກົດໝາຍສະບັບນີ້.

**ມາດຕາ 76 ເນື້ອໃນມະຕິປັບປຸງ ຫຼື ຕໍ່ອາຍຸ**

ມະຕິປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາ ມີເນື້ອໃນ ດັ່ງນີ້:

1. ຊື່, ວັນເວລາ, ສະຖານທີ່ລົງນາມ ແລະ ວັນເວລາມີຜົນສັກສິດຂອງສົນທິສັນຍາທີ່ປັບປຸງ ຫຼື ຕໍ່ອາຍຸ;

2. ເນື້ອໃນການປັບປຸງ, ໄລຍະເວລາການຕໍ່ອາຍຸສົນທິສັນຍາ;

3. ຄວາມຮັບຜິດຊອບຂອງອົງການທີ່ສະເໜີ, ຂອງກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 77 ການ ຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດ**

ການ ຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາ ໃຫ້ປະຕິບັດຕາມບົດບັນຍັດຂອງສົນທິສັນຍານັ້ນ ຫຼື ຕາມການຕົກລົງລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ.

ອົງການທີ່ສະເໜີ ຕ້ອງສະເໜີຕໍ່ກະຊວງການຕ່າງປະເທດ ເພື່ອຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດ ພ້ອມທັງເອກະສານທີ່ໄດ້ກຳນົດໄວ້ໃນວັກ 3 ຂອງມາດຕານີ້. ກະຊວງການຕ່າງປະເທດ ຕ້ອງພິຈາລະນາການສະເໜີດັ່ງກ່າວ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ. ຈາກນັ້ນ ກະຊວງການຕ່າງປະເທດ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ ຍົກເລີກ, ລົບ

ລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາ ທີ່ລັດຖະບານເປັນຜູ້ຕົກລົງໃຫ້ລົງນາມ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີ. ສຳລັບການຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາທີ່ສະພາແຫ່ງຊາດເປັນຜູ້ຕົກລົງໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີນັ້ນ ລັດຖະບານ ຕ້ອງນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາ.

ເອກະສານປະກອບໃນການສະເໜີ ຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາ ແມ່ນຄືກັນກັບເອກະສານປະກອບໃນການສະເໜີປັບປຸງ ຫຼື ຕໍ່ອາຍຸສົນທິສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 73 ຂອງກົດໝາຍສະບັບນີ້.

**ມາດຕາ 78 ອົງການທີ່ມີສິດຕົກລົງຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດ**

ສະພາແຫ່ງຊາດ ມີສິດຕົກລົງ ຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາ ທີ່ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີ.

ລັດຖະບານ ມີສິດຕົກລົງ ຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາ ທີ່ ລັດຖະບານໄດ້ຕົກລົງ ໃຫ້ລົງນາມ, ຮັບຮອງ ຫຼື ເຂົ້າຮ່ວມເປັນພາຄີ.

ໃນກໍລະນີຈຳເປັນ ປະທານປະເທດ ຫຼື ລັດຖະບານ ສາມາດຕົກລົງໂຈະການປະຕິບັດສົນທິສັນຍາທີ່ປະທານປະເທດ ຫຼື ລັດຖະບານໄດ້ຕົກລົງໃຫ້ລົງນາມ ຫຼື ສົນທິສັນຍາທີ່ຄະນະປະຈຳສະພາແຫ່ງຊາດ ໄດ້ຕົກລົງໃຫ້ສັດຕະຍາບັນ ແຕ່ຕ້ອງລາຍງານຕໍ່ສະພາແຫ່ງຊາດ.

**ມາດຕາ 79 ເນື້ອໃນມະຕິຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດ**

ມະຕິຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາ ມີເນື້ອໃນ ດັ່ງນີ້:

1. ຊື່ສົນທິສົນທິສັນຍາທີ່ຖືກຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດ; ວັນເວລາ, ສະຖານທີ່ລົງນາມ ແລະ ວັນເວລາມີຜົນສັກສິດ;

2. ຂອບເຂດຄວາມຮັບຜິດຊອບຂອງ ອົງການທີ່ສະເໜີ, ກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 80 ການແຈ້ງກ່ຽວກັບຜົນສັກສິດ**

ກະຊວງການຕ່າງປະເທດ ຕ້ອງແຈ້ງໃຫ້ອົງການທີ່ກ່ຽວຂ້ອງຊາບກ່ຽວກັບວັນເວລາມີຜົນສັກສິດຂອງສົນທິສັນຍາ ສຳລັບ ສປປ ລາວ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການແຈ້ງຈາກພາຄີຕ່າງປະເທດ ຫຼື ຈາກຜູ້ເກັບຮັກສາສົນທິສັນຍາພະຫຸພາຄີ.

ສຳລັບວັນເວລາ ມີຜົນສັກສິດຂອງຂໍ້ສະຫງວນຂອງ ສປປ ລາວ, ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ, ການຖອນ ຫຼື ການຖອນການຄັດຄ້ານຂໍ້ສະຫງວນນັ້ນ ກະຊວງການຕ່າງປະເທດ ຕ້ອງແຈ້ງໃຫ້ອົງການທີ່ກ່ຽວຂ້ອງຊາບ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການແຈ້ງຈາກຜູ້ເກັບຮັກສາສົນທິສັນຍາ.

ສ່ວນວັນເວລາ ມີຜົນສັກສິດຂອງການຍົກເລີກປະຕິບັດຊົ່ວຄາວສົນທິສັນຍາ, ການປັບປຸງ ຫຼື ຕໍ່ອາຍຸ, ການຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍານັ້ນ ກະຊວງການຕ່າງປະ

ເທດ ຕ້ອງແຈ້ງໃຫ້ອົງການທີ່ກ່ຽວຂ້ອງຊາບ ພາຍໃນເວລາ ສິບຫ້າວັນ ລັດຖະການເຊັ່ນກັນ ນັບແຕ່ວັນໄດ້ຮັບການແຈ້ງຈາກພາຄີຕ່າງປະເທດ ຫຼື ຈາກຜູ້ເກັບຮັກສາສົນທິສັນຍາ.

## ໝວດທີ 10
## ການເກັບຮັກສາ, ສຳເນົາ ແລະ ເຜີຍແຜ່ສົນທິສັນຍາ

### ມາດຕາ 81 ການເກັບຮັກສາ

ກະຊວງການຕ່າງປະເທດ ເປັນຜູ້ເກັບຮັກສາສົນທິສັນຍາທະວິພາຄີສະບັບຕົ້ນ, ສຳເນົາສົນທິສັນຍາພະຫຸພາຄີ ທີ່ ສປປ ລາວ ເປັນພາຄີ ທີ່ໄດ້ຮັບການຢັ້ງຢືນໂດຍຜູ້ເກັບຮັກສາສົນທິສັນຍາ, ສານໃຫ້ສັດຕະຍາບັນ, ສານຮັບຮອງ ແລະ ສານເຂົ້າຮ່ວມເປັນພາຄີ, ຂໍ້ສະຫງວນ, ຄຳຖະແຫຼງ; ໜັງສືມອບສິດເຈລະຈາ, ໜັງສືມອບສິດລົງນາມສົນທິສັນຍາ, ໜັງສືແຕ່ງຕັ້ງເຂົ້າຮ່ວມກອງປະຊຸມສາກົນ ແລະ ເອກະສານອື່ນທີ່ກ່ຽວຂ້ອງ.

ອົງການທີ່ສະເໜີ ຕ້ອງສົ່ງສົນທິສັນຍາສະບັບຕົ້ນ ຫຼື ສະບັບສຳເນົາທີ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ແລະ ບົດແປສົນທິສັນຍາເປັນພາສາລາວ, ໜັງສືມອບສິດເຈລະຈາ ຫຼື ໜັງສືມອບສິດລົງນາມສົນທິສັນຍາຂອງຝ່າຍຕ່າງປະເທດ ໃຫ້ກະຊວງການຕ່າງປະເທດ ເພື່ອເກັບຮັກສາຕາມເວລາທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍສະບັບນີ້.

ກະຊວງການຕ່າງປະເທດ ເປັນຜູ້ເກັບຮັກສາສົນທິສັນຍາພະຫຸພາຄີສະບັບຕົ້ນ ໃນກໍລະນີທີ່ ສປປ ລາວ ຫາກຖືກມອບໝາຍໃຫ້ເປັນຜູ້ເກັບຮັກສາສົນທິສັນຍາພະຫຸພາຄີນັ້ນ.

### ມາດຕາ 82 ການສຳເນົາ

ກະຊວງການຕ່າງປະເທດ ຕ້ອງສຳເນົາສົນທິສັນຍາທະວິພາຄີທີ່ມີຜົນສັກສິດ ສົ່ງໃຫ້ສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານເພື່ອລາຍງານ; ສົ່ງໃຫ້ອົງການອື່ນທີ່ກ່ຽວຂ້ອງ ເພື່ອປະຕິບັດ; ສົ່ງໃຫ້ກະຊວງຍຸຕິທຳເພື່ອລົງໃນຈົດໝາຍເຫດທາງລັດຖະການພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບສົນທິສັນຍາທະວິພາຄີສະບັບຕົ້ນ ຫຼື ວັນໄດ້ຮັບການແຈ້ງກ່ຽວກັບການມີຜົນສັກສິດຂອງສົນທິສັນຍາສຳລັບ ສປປ ລາວ.

ກະຊວງການຕ່າງປະເທດ ຕ້ອງສຳເນົາສົນທິສັນຍາພະຫຸພາຄີທີ່ມີຜົນສັກສິດ ສົ່ງໃຫ້ສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານ ເພື່ອລາຍງານ; ສົ່ງໃຫ້ອົງການອື່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ; ສົ່ງໃຫ້ກະຊວງຍຸຕິທຳ ເພື່ອລົງໃນຈົດໝາຍເຫດທາງລັດຖະການ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບສຳເນົາສົນທິສັນຍາພະຫຸພາຄີທີ່ມີການຢັ້ງຢືນຄວາມຖືກຕ້ອງຈາກຜູ້ເກັບຮັກສາສົນທິສັນຍາ ຫຼື ວັນໄດ້ຮັບການແຈ້ງກ່ຽວກັບການມີຜົນສັກສິດຂອງສົນທິສັນຍາພະຫຸພາຄີສຳລັບ ສປປ ລາວ.

**ມາດຕາ 83 ການເຜີຍແຜ່**

ສົນທິສັນຍາທີ່ມີຜົນສັກສິດສໍາລັບ ສປປ ລາວ ຕ້ອງໄດ້ລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ແລະ ລົງໃນເວັບໄຊຂອງອົງການທີ່ສະເໜີ, ເວັ້ນເສຍແຕ່ມີການຕົກລົງເປັນຢ່າງອື່ນລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ ຫຼື ມີການຕົກລົງເປັນຢ່າງອື່ນຂອງອົງການທີ່ມີສິດ. ໃນກໍລະນີບໍ່ເອົາສົນທິສັນຍາລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ອົງການທີ່ສະເໜີ ຕ້ອງແຈ້ງເນື້ອໃນສົນທິສັນຍາໃຫ້ບຸກຄົນ ແລະ ອົງການທີ່ກ່ຽວຂ້ອງໂດຍກົງເພື່ອຈັດຕັ້ງປະຕິບັດ.

ກະຊວງຍຸຕິທໍາ ຕ້ອງເອົາສົນທິສັນຍາລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບສໍາເນົາສົນທິສັນຍາທີ່ມີຜົນສັກສິດຈາກກະຊວງການຕ່າງປະເທດ.

ອົງການທີ່ສະເໜີ ຕ້ອງເອົາສົນທິສັນຍາລົງເຜີຍແຜ່ໃນເວັບໄຊຂອງຕົນ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບສໍາເນົາສົນທິສັນຍາທີ່ມີຜົນສັກສິດ ຈາກກະຊວງການຕ່າງປະເທດ.

ໃນກໍລະນີສົນທິສັນຍາຫາກໄດ້ລົງນາມເປັນພາສາຕ່າງປະເທດ ຕ້ອງໄດ້ເອົາທັງສະບັບພາສາຕ່າງປະເທດ ແລະ ສະບັບແປເປັນພາສາລາວລົງເຜີຍແຜ່.

ກະຊວງການຕ່າງປະເທດ ຕ້ອງເອົາສົນທິສັນຍາລົງເຜີຍແຜ່ໃນເວັບໄຊຂອງຕົນ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ສົ່ງສໍາເນົາສົນທິສັນຍາຕາມທີ່ໄດ້ກໍານົດໄວ້ໃນມາດຕາ 82 ຂອງກົດໝາຍສະບັບນີ້.

**ມາດຕາ 84 ການສະໜອງສໍາເນົາ**

ກະຊວງການຕ່າງປະເທດ ສະໜອງສໍາເນົາສົນທິສັນຍາ ທີ່ ສປປ ລາວ ເປັນພາຄີໃຫ້ອົງການຈັດຕັ້ງ ຫຼື ບຸກຄົນ ຕາມການສະເໜີ.

**ມາດຕາ 85 ລະບົບຖານຂໍ້ມູນກ່ຽວກັບສົນທິສັນຍາ**

ກະຊວງການຕ່າງປະເທດ ປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງໃນການສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນກ່ຽວກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

ຂໍ້ມູນກ່ຽວກັບສົນທິສັນຍາທີ່ມີຜົນສັກສິດ ຕ້ອງເກັບຮັກສາໄວ້ໃນລະບົບຖານຂໍ້ມູນກ່ຽວກັບສົນທິສັນຍາ.

## ໝວດທີ 11
## ຂັ້ນຕອນທາງການທູດ

**ມາດຕາ 86 ການອອກໜັງສືມອບສິດ ແລະ ໜັງສືແຕ່ງຕັ້ງ**

ກະຊວງການຕ່າງປະເທດ ເປັນຜູ້ອອກໜັງສືມອບສິດໃຫ້ເຈລະຈາ ຫຼື ລົງນາມ ສົນທິສັນຍາ ແລະ ໜັງສືແຕ່ງຕັ້ງໃຫ້ເຂົ້າຮ່ວມກອງປະຊຸມສາກົນ ຕາມການຕົກລົງຂອງອົງການທີ່ ມີສິດ.

ລັດຖະມົນຕີກະຊວງການຕ່າງປະເທດ ເປັນຜູ້ລົງນາມໜັງສືມອບສິດໃຫ້ເຈລະຈາ ຫຼື ລົງນາມສົນທິສັນຍາ ແລະ ໜັງສືແຕ່ງຕັ້ງໃຫ້ເຂົ້າຮ່ວມກອງປະຊຸມສາກົນ.

ອົງການທີ່ສະເໜີ ຕ້ອງແຈ້ງຊື່ຜູ້ໄດ້ຮັບມອບສິດ ຫຼື ແຕ່ງຕັ້ງ ເປັນລາຍລັກອັກສອນ ພ້ອມທັງຊື່ເຕັມສົນທິສັນຍາທີ່ເປັນພາສາລາວ ແລະ ພາສາຕ່າງປະເທດ ໃຫ້ກະຊວງການຕ່າງປະເທດ ຢ່າງຊ້າ ຫ້າວັນ ລັດຖະການ ກ່ອນວັນເຈລະຈາ ຫຼື ລົງນາມສົນທິສັນຍາ ແລະ ເຂົ້າຮ່ວມກອງປະຊຸມສາກົນ.

ໃນກໍລະນີມີການປ່ຽນແປງກ່ຽວກັບຜູ້ໄດ້ຮັບມອບສິດ ຫຼື ໄດ້ຮັບການແຕ່ງຕັ້ງ ອົງການທີ່ສະເໜີ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອສະເໜີຕໍ່ອົງການທີ່ມີສິດຕົກລົງຢ່າງຮີບດ່ວນ. ພາຍຫຼັງໄດ້ຮັບການຕົກລົງຂອງອົງການທີ່ມີສິດ ກະຊວງການຕ່າງປະເທດອອກໜັງສືມອບສິດ ຫຼື ໜັງສືແຕ່ງຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນວັກ 1, 2 ແລະ 3 ຂອງມາດຕານີ້.

## ມາດຕາ 87 ຂັ້ນຕອນທາງການທູດກ່ຽວກັບການໃຫ້ສັດຕະຍາບັນ, ການຮັບຮອງ, ການເຂົ້າຮ່ວມເປັນພາຄີສົນທິສັນຍາ

ກະຊວງການຕ່າງປະເທດ ຕ້ອງແຈ້ງໃຫ້ພາຄີຕ່າງປະເທດ ຫຼື ຜູ້ເກັບຮັກສາສົນທິສັນຍາ ກ່ຽວກັບການໃຫ້ສັດຕະຍາບັນ, ການຮັບຮອງ, ການເຂົ້າຮ່ວມເປັນພາຄີສົນທິສັນຍາ ພາຍໃນເວລາ ຊາວວັນລັດຖະການ ນັບແຕ່ວັນໄດ້ຮັບສານປະກາດການໃຫ້ສັດຕະຍາບັນ, ມະຕິຮັບຮອງ, ມະຕິ ຫຼື ສານປະກາດເຂົ້າຮ່ວມເປັນພາຄີສົນທິສັນຍາ.

ລັດຖະມົນຕີກະຊວງການຕ່າງປະເທດ ລົງນາມສານໃຫ້ສັດຕະຍາບັນ, ສານຮັບຮອງ, ສານເຂົ້າຮ່ວມເປັນພາຄີສົນທິສັນຍາພະຫຸພາຄີ ເພື່ອສົ່ງໃຫ້ຜູ້ເກັບຮັກສາສົນທິສັນຍາ.

ໃນກໍລະນີສົນທິສັນຍາທະວິພາຄີຫາກກໍານົດໄວ້ ຫຼື ຕາມການຕົກລົງລະຫວ່າງຝ່າຍລາວ ກັບພາຄີຕ່າງປະເທດ ກ່ຽວກັບການແລກປ່ຽນສານປະກາດໃຫ້ສັດຕະຍາບັນ ເພື່ອເຮັດໃຫ້ສົນທິສັນຍາມີຜົນສັກສິດ ກະຊວງການຕ່າງປະເທດ ປະສານສົມທົບກັບອົງການທີ່ສະເໜີເພື່ອດໍາເນີນການແລກປ່ຽນສານປະກາດໃຫ້ສັດຕະຍາບັນກັບພາຄີຕ່າງປະເທດ.

## ມາດຕາ 88 ຂັ້ນຕອນທາງການທູດກ່ຽວກັບຂໍ້ສະຫງວນ

ກະຊວງການຕ່າງປະເທດ ຕ້ອງປະສານສົມທົບກັບອົງການທີ່ສະເໜີ ເພື່ອແຈ້ງໃຫ້ຜູ້ເກັບຮັກສາສົນທິສັນຍາຊາບກ່ຽວກັບຂໍ້ສະຫງວນຂອງ ສປປ ລາວ ໃນເວລາລົງນາມ ຫຼື ສົ່ງໄປພ້ອມກັບສານໃຫ້ສັດຕະຍາບັນ, ສານຮັບຮອງ ຫຼື ສານເຂົ້າຮ່ວມເປັນພາຄີສົນທິສັນຍາ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງອົງການທີ່ມີສິດໄດ້ຕົກລົງ.

ກະຊວງການຕ່າງປະເທດ ຕ້ອງແຈ້ງໃຫ້ຜູ້ເກັບຮັກສາສົນທິສັນຍາ ກ່ຽວກັບການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງອົງການທີ່ມີສິດໄດ້ຕົກລົງ ຫຼື ສົ່ງໄປພ້ອມກັບສານໃຫ້ສັດຕະຍາບັນ, ສານຮັບຮອງ ຫຼື ສານເຂົ້າຮ່ວມເປັນພາຄີສົນທິສັນຍາ.

ລັດຖະມົນຕີກະຊວງການຕ່າງປະເທດ ລົງນາມໜັງສືແຈ້ງກ່ຽວກັບຂໍ້ສະຫງວນຂອງ ສປປ ລາວ, ການຮັບຮູ້ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີຕ່າງປະເທດ, ການຖອນ ຫຼື ການຖອນການຄັດຄ້ານຂໍ້ສະຫງວນ ເພື່ອສົ່ງໃຫ້ຜູ້ເກັບຮັກສາສົນທິສັນຍາ.

**ມາດຕາ 89 ຂັ້ນຕອນທາງການທູດກ່ຽວກັບການຍົກເລີກການປະຕິບັດຊົ່ວຄາວສົນທິສັນຍາ**

ກະຊວງການຕ່າງປະເທດ ຕ້ອງປະສານສົມທົບກັບອົງການທີ່ສະເໜີ ແຈ້ງໃຫ້ພາຄີຕ່າງປະເທດຊາບກ່ຽວກັບການຕົກລົງຍົກເລີກການປະຕິບັດຊົ່ວຄາວສົນທິສັນຍາຂອງຝ່າຍລາວ ຫຼື ແຈ້ງຕອບການສະເໜີຂອງພາຄີຕ່າງປະເທດກ່ຽວກັບການຍົກເລີກການປະຕິບັດຊົ່ວຄາວສົນທິສັນຍາ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງອົງການທີ່ມີສິດໄດ້ຕົກລົງ.

**ມາດຕາ 90 ຂັ້ນຕອນທາງການທູດກ່ຽວກັບການປັບປຸງ ຫຼື ການຕໍ່ອາຍຸສົນທິສັນຍາ**

ກະຊວງການຕ່າງປະເທດ ຕ້ອງປະສານສົມທົບກັບອົງການທີ່ສະເໜີ ເພື່ອແຈ້ງໃຫ້ພາຄີຕ່າງປະເທດຊາບກ່ຽວກັບການປັບປຸງ ຫຼື ການຕໍ່ອາຍຸສົນທິສັນຍາ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງອົງການທີ່ມີສິດໄດ້ຕົກລົງ.

**ມາດຕາ 91 ຂັ້ນຕອນທາງການທູດກ່ຽວກັບການຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາ**

ກະຊວງການຕ່າງປະເທດ ຕ້ອງປະສານສົມທົບກັບອົງການທີ່ສະເໜີ ເພື່ອແຈ້ງໃຫ້ພາຄີຕ່າງປະເທດຊາບກ່ຽວກັບການຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາທະວິພາຄີ ທີ່ ສປປ ລາວ ເປັນພາຄີ.

ລັດຖະມົນຕີກະຊວງການຕ່າງປະເທດ ລົງນາມໜັງສືແຈ້ງກ່ຽວກັບການຍົກເລີກ, ລົບລ້າງ, ຖອນຕົວ ຫຼື ໂຈະການປະຕິບັດສົນທິສັນຍາພະຫຸພາຄີທີ່ ສປປ ລາວ ເປັນພາຄີເພື່ອສົ່ງໃຫ້ຜູ້ເກັບຮັກສາສົນທິສັນຍາ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງອົງການທີ່ມີສິດໄດ້ຕົກລົງ.

**ມາດຕາ 92 ການຈົດທະບຽນສົນທິສັນຍາ**

ກະຊວງການຕ່າງປະເທດ ດຳເນີນການຈົດທະບຽນສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ນຳສຳນັກງານເລຂາທິການອົງການສະຫະປະຊາຊາດ ໃນກໍລະນີທີ່ຕ້ອງຈົດທະບຽນສົນທິສັນຍາ.

## ພາກທີ III
## ການສ້າງສັນຍາສາກົນ

**ມາດຕາ 93 ການສ້າງສັນຍາສາກົນ**

ການສ້າງສັນຍາສາກົນ ແມ່ນ ການປະຕິບັດຕາມກົດໝາຍໂດຍອົງການຂັ້ນສູນກາງ ຫຼື ອົງການຂັ້ນແຂວງ ໃນນັ້ນມີ ການເຈລະຈາ, ການລົງນາມ ຫຼື ການແລກປ່ຽນສານ.

ສຳລັບເນື້ອໃນຂອງສັນຍາສາກົນຕ້ອງບໍ່ກ່ຽວກັບບັນຫາສົງຄາມ, ສັນຕິພາບ, ຄວາມໝັ້ນຄົງ, ອຳນາດອະທິປະໄຕຂອງຊາດ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ການຮ່ວມມືທາງດ້ານຍຸຕິທຳ, ການເຂົ້າຮ່ວມເປັນສະມາຊິກອົງການຈັດຕັ້ງສາກົນ, ການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ບັນຫາອື່ນກ່ຽວກັບການຮ່ວມມືໃນລະດັບ ສປປ ລາວ ຫຼື ລັດຖະບານ ແຫ່ງ ສປປ ລາວ.

### ມາດຕາ 94 ວິທີການເປັນຄູ່ສັນຍາຂອງສັນຍາສາກົນ

ວິທີການເປັນຄູ່ສັນຍາຂອງສັນຍາສາກົນ ສຳລັບອົງການຂັ້ນສູນກາງ, ອົງການຂັ້ນແຂວງ ມີດັ່ງນີ້:

1. ການລົງນາມສັນຍາສາກົນ;
2. ການແລກປ່ຽນສານ;
3. ວິທີການອື່ນ ຕາມການຕົກລົງກັບຄູ່ສັນຍາຕ່າງປະເທດ.

### ມາດຕາ 95 ການສ້າງສັນຍາສາກົນໃນນາມອົງການຂັ້ນສູນກາງ ແລະ ອົງການຂັ້ນແຂວງ

ການສ້າງສັນຍາສາກົນໃນນາມອົງການຂັ້ນສູນກາງ ແລະ ອົງການຂັ້ນແຂວງ ມີ ດັ່ງນີ້:

1. ສັນຍາສາກົນໃນນາມສະພາແຫ່ງຊາດ;
2. ສັນຍາສາກົນໃນນາມສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ;
3. ສັນຍາສາກົນໃນນາມກະຊວງ, ອົງການລັດທຽບເທົ່າກະຊວງ;
4. ສັນຍາສາກົນໃນນາມສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;
5. ສັນຍາສາກົນໃນນາມອົງການຂັ້ນແຂວງ.

## ໝວດທີ 1
## ການສ້າງສັນຍາສາກົນໃນນາມສະພາແຫ່ງຊາດ

### ມາດຕາ 96 ຜູ້ມີສິດຕົກລົງສ້າງສັນຍາສາກົນ

ຜູ້ມີສິດຕົກລົງສ້າງສັນຍາສາກົນ ມີ ດັ່ງນີ້:

1. ປະທານສະພາແຫ່ງຊາດ ມີສິດຕົກລົງສ້າງສັນຍາສາກົນໃນນາມສະພາແຫ່ງຊາດ ພາຍຫຼັງໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກຄະນະປະຈຳສະພາແຫ່ງຊາດ;
2. ປະທານກຳມາທິການ, ເລຂາທິການ ແລະ ຫົວໜ້າກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ມີສິດຕົກລົງສ້າງສັນຍາສາກົນໃນນາມກຳມາທິການ, ຄະນະເລຂາທິການ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ພາຍຫຼັງໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 97 ລະບຽບການສ້າງສັນຍາສາກົນ**

ກຳມາທິການ, ຄະນະເລຂາທິການ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ຕ້ອງປະສານສົມທົບກັບກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ເພື່ອສະເໜີຂໍຄຳເຫັນກ່ຽວກັບການສ້າງສັນຍາສາກົນນຳກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງກ່ອນສະເໜີຄະນະປະຈຳສະພາແຫ່ງຊາດພິຈາລະນາຕົກລົງ. ອົງການດັ່ງກ່າວ ຕ້ອງແຈ້ງຄຳເຫັນເປັນລາຍລັກອັກສອນພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງໄດ້ຮັບການສະເໜີ.

ກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ຕ້ອງສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາກ່ຽວກັບການສ້າງສັນຍາສາກົນ ພາຍຫຼັງໄດ້ຮັບຄຳເຫັນເປັນລາຍລັກອັກສອນຈາກອົງການທີ່ໄດ້ກຳນົດໄວ້ໃນວັກ 1 ຂອງມາດຕານີ້.

ຄະນະປະຈຳສະພາແຫ່ງຊາດ ຕ້ອງພິຈາລະນາ ແລະ ມີຄຳເຫັນກ່ຽວກັບການສ້າງສັນຍາສາກົນເປັນລາຍລັກອັກສອນ ພາຍໃນເວລາ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ພາຍຫຼັງທີ່ໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກຄະນະປະຈຳສະພາແຫ່ງຊາດແລ້ວ ປະທານສະພາແຫ່ງຊາດ, ປະທານກຳມາທິການ, ເລຂາທິການ, ຫົວໜ້າກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ລົງນາມສັນຍາສາກົນ ຫຼື ມອບສິດໃຫ້ບຸກຄົນອື່ນລົງນາມແທນ.

ພາຍຫຼັງທີ່ໄດ້ລົງນາມແລ້ວ ກຳມາທິການ, ຄະນະເລຂາທິການ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ຕ້ອງລາຍງານເປັນລາຍລັກອັກສອນຕໍ່ຄະນະປະຈຳສະພາແຫ່ງຊາດ ພ້ອມທັງສົ່ງສັນຍາສາກົນສະບັບຕົ້ນໃຫ້ກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ເພື່ອເກັບຮັກສາ ແລະ ສຳເນົາສົ່ງໃຫ້ກະຊວງການຕ່າງປະເທດ.

## ໝວດທີ 2
## ການສ້າງສັນຍາສາກົນໃນນາມສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ

**ມາດຕາ 98 ຜູ້ມີສິດຕົກລົງສ້າງສັນຍາສາກົນ**

ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ ມີສິດຕົກລົງສ້າງສັນຍາສາກົນໃນນາມອົງການຂອງຕົນ ພາຍຫຼັງໄດ້ຮັບການເຫັນດີ ເປັນລາຍລັກອັກສອນຈາກຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 99 ລະບຽບການສ້າງສັນຍາສາກົນ**

ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ຕ້ອງສະເໜີຂໍຄຳເຫັນກ່ຽວກັບການສ້າງສັນຍາສາກົນນຳກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງ ກ່ອນສະເໜີຄະນະປະຈຳສະພາແຫ່ງຊາດພິຈາລະນາຕົກລົງ. ອົງການດັ່ງກ່າວຕ້ອງແຈ້ງຄຳເຫັນເປັນລາຍລັກອັກສອນ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງໄດ້ຮັບການສະເໜີ.

ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ຕ້ອງສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາກ່ຽວກັບການສ້າງສັນຍາສາກົນ ພາຍຫຼັງໄດ້ຮັບຄຳເຫັນເປັນລາຍລັກອັກສອນຈາກອົງການທີ່ໄດ້ກຳນົດໄວ້ໃນວັກ 1 ຂອງມາດຕານີ້.

ຄະນະປະຈຳສະພາແຫ່ງຊາດ ຕ້ອງພິຈາລະນາ ແລະ ມີຄຳເຫັນກ່ຽວກັບການສ້າງສັນຍາສາກົນເປັນລາຍລັກອັກສອນ ພາຍໃນເວລາ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ພາຍຫຼັງທີ່ໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກຄະນະປະຈຳສະພາແຫ່ງຊາດແລ້ວ ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ ລົງນາມສັນຍາສາກົນ ຫຼື ມອບສິດໃຫ້ບຸກຄົນອື່ນລົງນາມແທນ.

ພາຍຫຼັງທີ່ໄດ້ລົງນາມແລ້ວ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ຕ້ອງລາຍງານເປັນລາຍລັກອັກສອນຕໍ່ຄະນະປະຈຳສະພາແຫ່ງຊາດ ພ້ອມທັງສົ່ງສຳເນົາສັນຍາສາກົນໃຫ້ກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ແລະ ກະຊວງການຕ່າງປະເທດ.

## ໝວດທີ 3
## ການສ້າງສັນຍາສາກົນໃນນາມກະຊວງ, ອົງການລັດທຽບເທົ່າກະຊວງ

### ມາດຕາ 100 ຜູ້ມີສິດຕົກລົງສ້າງສັນຍາສາກົນ

ຜູ້ທີ່ມີສິດຕົກລົງສ້າງສັນຍາສາກົນ ມີ ດັ່ງນີ້:

1. ລັດຖະມົນຕີ ມີສິດຕົກລົງສ້າງສັນຍາສາກົນໃນນາມກະຊວງ;
2. ຫົວໜ້າອົງການລັດທຽບເທົ່າກະຊວງ ມີສິດຕົກລົງສ້າງສັນຍາສາກົນໃນນາມອົງການລັດທຽບເທົ່າກະຊວງ.

### ມາດຕາ 101 ລະບຽບການສ້າງສັນຍາສາກົນ

ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງສະເໜີຂໍຄຳເຫັນກ່ຽວກັບການສ້າງສັນຍາສາກົນນຳກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງ. ອົງການດັ່ງກ່າວ ຕ້ອງແຈ້ງຄຳເຫັນເປັນລາຍລັກອັກສອນ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງໄດ້ຮັບການສະເໜີ. ຈາກນັ້ນ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ລົງນາມສັນຍາສາກົນ ຫຼື ມອບສິດໃຫ້ບຸກຄົນອື່ນລົງນາມແທນ.

ໃນກໍລະນີກະຊວງການຕ່າງປະເທດ, ອົງການອື່ນທີ່ກ່ຽວຂ້ອງ, ກະຊວງ ຫຼື ອົງການລັດທຽບເທົ່າກະຊວງ ຫາກມີຄຳເຫັນຕ່າງກັນໃຫ້ກະຊວງການຕ່າງປະເທດ ສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາ ພາຍໃນເວລາ ຊາວວັນ ລັດຖະການ ພາຍຫຼັງໄດ້ຮັບການສະເໜີ.

ພາຍຫຼັງນາຍົກລັດຖະມົນຕີ ໄດ້ມີຄຳເຫັນກ່ຽວກັບການສ້າງສັນຍາສາກົນ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ລົງນາມສັນຍາສາກົນ ຫຼື ມອບສິດໃຫ້ບຸກຄົນ ອື່ນລົງນາມແທນ.

ພາຍຫຼັງທີ່ໄດ້ລົງນາມແລ້ວ ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງລາຍງານເປັນລາຍລັກອັກສອນຕໍ່ນາຍົກລັດຖະມົນຕີ ພ້ອມທັງສົ່ງສຳເນົາສັນຍາສາກົນໃຫ້ກະຊວງການຕ່າງປະເທດ.

## ໝວດທີ 4
## ການສ້າງສັນຍາສາກົນໃນນາມສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ

### ມາດຕາ 102 ຜູ້ມີສິດຕົກລົງສ້າງສັນຍາສາກົນ

ປະທານສູນກາງແນວລາວສ້າງຊາດ, ປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ, ປະທານສະຫະພັນກຳມະບານລາວ, ປະທານສູນກາງສະຫະພັນແມ່ຍິງລາວ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ມີສິດຕົກລົງສ້າງສັນຍາສາກົນໃນນາມອົງການຈັດຕັ້ງຂອງຕົນ ພາຍຫຼັງທີ່ໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກອົງການຄຸ້ມຄອງການເຄື່ອນໄຫວວຽກງານການຕ່າງປະເທດ.

### ມາດຕາ 103 ລະບຽບການສ້າງສັນຍາສາກົນ

ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ຕ້ອງສະເໜີຂໍຄຳເຫັນກ່ຽວກັບການສ້າງສັນຍາສາກົນນຳກະຊວງການຕ່າງປະເທດ, ອົງການລັດທີ່ຄຸ້ມຄອງຂົງເຂດການຮ່ວມມືດັ່ງກ່າວ ແລະ ອົງການອື່ນທີ່ກ່ຽວຂ້ອງ ກ່ອນສະເໜີຂໍຄຳເຫັນຈາກອົງການຄຸ້ມຄອງການເຄື່ອນໄຫວວຽກງານການຕ່າງປະເທດ. ອົງການດັ່ງກ່າວ ຕ້ອງແຈ້ງຄຳເຫັນເປັນລາຍລັກອັກສອນ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງໄດ້ຮັບການສະເໜີ.

ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ຕ້ອງສະເໜີຕໍ່ອົງການຄຸ້ມຄອງການເຄື່ອນໄຫວວຽກງານການຕ່າງປະເທດ ເພື່ອພິຈາລະນາກ່ຽວກັບການສ້າງສັນຍາສາກົນ ພາຍຫຼັງໄດ້ຮັບຄຳເຫັນເປັນລາຍລັກອັກສອນຈາກອົງການທີ່ໄດ້ກຳນົດໄວ້ໃນວັກ 1 ຂອງມາດຕານີ້.

ອົງການຄຸ້ມຄອງການເຄື່ອນໄຫວວຽກງານການຕ່າງປະເທດ ຕ້ອງພິຈາລະນາ ແລະ ມີຄຳເຫັນກ່ຽວກັບການສ້າງສັນຍາສາກົນເປັນລາຍລັກອັກສອນ ພາຍໃນເວລາ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ພາຍຫຼັງທີ່ໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກອົງການຄຸ້ມຄອງການເຄື່ອນໄຫວວຽກງານການຕ່າງປະເທດແລ້ວ ປະທານສູນກາງແນວລາວສ້າງຊາດ, ປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ, ປະທານສະຫະພັນກຳມະບານລາວ, ປະທານສູນກາງສະຫະພັນແມ່ຍິງລາວ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ລົງນາມສັນຍາສາກົນ ຫຼື ມອບສິດໃຫ້ບຸກຄົນອື່ນ ລົງນາມແທນ.

ພາຍຫຼັງທີ່ໄດ້ລົງນາມແລ້ວ ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງຕ້ອງລາຍງານເປັນລາຍລັກອັກສອນຕໍ່ອົງການຄຸ້ມຄອງການເຄື່ອນໄຫວວຽກງານການຕ່າງປະເທດ ພ້ອມທັງສົ່ງສຳເນົາສັນຍາສາກົນໃຫ້ກະຊວງການຕ່າງປະເທດ.

## ໝວດທີ 5
## ການສ້າງສັນຍາສາກົນໃນນາມອົງການຂັ້ນແຂວງ

### ມາດຕາ 104 ຜູ້ມີສິດຕົກລົງສ້າງສັນຍາສາກົນ

ຜູ້ມີສິດຕົກລົງສ້າງສັນຍາສາກົນ ມີ ດັ່ງນີ້:

1. ປະທານສະພາປະຊາຊົນ ແຂວງ, ນະຄອນຫຼວງ ມີສິດຕົກລົງສ້າງສັນຍາສາກົນໃນນາມ ສະພາປະຊາຊົນ ແຂວງ, ນະຄອນຫຼວງ ພາຍຫຼັງໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກຄະນະ ປະຈຳສະພາປະຊາຊົນ ແຂວງ, ນະຄອນຫຼວງ;

2. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມີສິດຕົກລົງສ້າງສັນຍາສາກົນໃນນາມອົງການປົກ ຄອງ ແຂວງ, ນະຄອນຫຼວງ.

### ມາດຕາ 105 ລະບຽບການສ້າງສັນຍາສາກົນ

ອົງການຂັ້ນແຂວງ ຕ້ອງສະເໜີຂໍຄຳເຫັນກ່ຽວກັບການສ້າງສັນຍາສາກົນນຳກະຊວງການ ຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງ. ອົງການດັ່ງກ່າວ ຕ້ອງແຈ້ງຄຳເຫັນເປັນລາຍລັກອັກສອນ ພາຍໃນເວລາ ສິບຫ້າວັນ ລັດຖະການ ພາຍຫຼັງໄດ້ຮັບການສະເໜີ. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານສະພາປະຊາຊົນ ແຂວງ, ນະຄອນຫຼວງ ລົງນາມສັນຍາສາກົນ ຫຼື ມອບສິດໃຫ້ບຸກຄົນອື່ນ ລົງ ນາມແທນ.

ໃນກໍລະນີກະຊວງການຕ່າງປະເທດ, ອົງການອື່ນທີ່ກ່ຽວຂ້ອງ ຫຼື ອົງການຂັ້ນແຂວງ ຫາກມີ ຄຳເຫັນຕ່າງກັນໃຫ້ປະຕິບັດ ດັ່ງນີ້:

1. ສຳລັບສັນຍາສາກົນໃນນາມສະພາປະຊາຊົນ ແຂວງ, ນະຄອນຫຼວງ ໃຫ້ກະຊວງການ ຕ່າງປະເທດ ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

2. ສຳລັບສັນຍາສາກົນໃນນາມອົງການປົກຄອງ ແຂວງ, ນະຄອນຫຼວງ ໃຫ້ກະຊວງການ ຕ່າງປະເທດສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາ.

3. ຄະນະປະຈຳສະພາແຫ່ງຊາດ ຫຼື ນາຍົກລັດຖະມົນຕີ ພິຈາລະນາ ແລະ ມີຄຳເຫັນ ກ່ຽວກັບການສ້າງສັນຍາສາກົນເປັນລາຍລັກອັກສອນ ພາຍໃນເວລາ ຊາວວັນ ລັດຖະການ ພາຍຫຼັງ ໄດ້ຮັບການສະເໜີ;

4. ພາຍຫຼັງຄະນະປະຈຳສະພາແຫ່ງຊາດ ຫຼື ນາຍົກລັດຖະມົນຕີ ເຫັນດີ ກ່ຽວກັບການສ້າງ ສັນຍາສາກົນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານສະພາປະຊາຊົນ ແຂວງ, ນະຄອນຫຼວງ ລົງ ນາມສັນຍາສາກົນ ຫຼື ມອບສິດໃຫ້ບຸກຄົນອື່ນລົງນາມແທນ.

ສັນຍາສາກົນທີ່ໄດ້ລົງນາມແລ້ວ ອົງການຂັ້ນແຂວງ ຕ້ອງລາຍງານເປັນລາຍລັກອັກສອນຕໍ່ ຄະນະປະຈຳສະພາແຫ່ງຊາດ ຫຼື ນາຍົກລັດຖະມົນຕີ ພ້ອມທັງສົ່ງສຳເນົາສັນຍາສາກົນໃຫ້ກະຊວງການ ຕ່າງປະເທດ.

## ໝວດທີ 6
## ເອກະສານປະກອບກ່ຽວກັບສັນຍາສາກົນ

### ມາດຕາ 106 ເອກະສານປະກອບໃນການສະເໜີຂໍຄຳເຫັນກ່ຽວກັບການສ້າງສັນຍາສາກົນ

ການສະເໜີຂໍຄຳເຫັນກ່ຽວກັບການສ້າງສັນຍາສາກົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 97, 99, 101, 103 ແລະ 105 ຂອງກົດໝາຍສະບັບນີ້ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ ທີ່ກຳນົດຈຸດປະສົງ ແລະ ເປົ້າໝາຍຂອງການສ້າງ, ເນື້ອໃນຕົ້ນຕໍຂອງສັນຍາສາກົນ, ຜົນກະທົບທາງດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ-ສັງຄົມ ແລະ ຜົນກະທົບດ້ານອື່ນ ລວມທັງການປະເມີນຄວາມສອດຄ່ອງກັບຫຼັກການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍສະບັບນີ້;

2. ຮ່າງສັນຍາສາກົນສະບັບພາສາລາວ ແລະ ພາສາຕ່າງປະເທດ ໃນກໍລະນີສັນຍາສາກົນຈະລົງນາມເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ;

3. ເອກະສານອື່ນທີ່ຈຳເປັນ.

### ມາດຕາ 107 ເອກະສານປະກອບໃນການສະເໜີສ້າງສັນຍາສາກົນ ແລະ ກໍລະນີມີຄຳເຫັນຕ່າງກັນ

ການສະເໜີໃຫ້ພິຈາລະນາ ກ່ຽວກັບການສ້າງສັນຍາສາກົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 97, 99, 101, 103 ແລະ 105 ຂອງກົດໝາຍສະບັບນີ້ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີ ທີ່ກຳນົດຈຸດປະສົງ ແລະ ເປົ້າໝາຍຂອງການສ້າງ, ເນື້ອໃນຕົ້ນຕໍຂອງສັນຍາສາກົນ, ຜົນກະທົບທາງດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ-ສັງຄົມ ແລະ ຜົນກະທົບດ້ານອື່ນ ລວມທັງການປະເມີນຄວາມສອດຄ່ອງກັບຫຼັກການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍສະບັບນີ້, ບັນຫາທີ່ຍັງມີຄຳເຫັນຕ່າງກັນຂອງອົງການທີ່ກ່ຽວຂ້ອງ;

2. ຄຳເຫັນຂອງກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 97, 99, 101, 103 ແລະ 105 ຂອງກົດໝາຍສະບັບນີ້;

3. ຮ່າງສັນຍາສາກົນສະບັບທີ່ເປັນພາສາລາວ ແລະ ສະບັບທີ່ເປັນພາສາຕ່າງປະເທດ. ໃນກໍລະນີສັນຍາສາກົນຈະລົງນາມເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ;

4. ເອກະສານອື່ນທີ່ຈຳເປັນ.

## ໝວດທີ 7
## ຜົນສັກສິດ, ການປັບປຸງ ຫຼື ຕໍ່ອາຍຸ, ການຍົກເລີກ ຫຼື ໂຈະການປະຕິບັດສັນຍາສາກົນ

### ມາດຕາ 108 ຜົນສັກສິດຂອງສັນຍາສາກົນ

ສັນຍາສາກົນ ມີຜົນສັກສິດຕາມບົດບັນຍັດທີ່ໄດ້ກຳນົດໄວ້ໃນສັນຍາສາກົນນັ້ນ. ໃນກໍລະນີສັນຍາສາກົນບໍ່ໄດ້ກຳນົດກ່ຽວກັບຜົນສັກສິດ, ສັນຍາສາກົນນັ້ນ ຈະມີຜົນສັກສິດຕາມການຕົກລົງລະຫວ່າງຝ່າຍລາວ ແລະ ຄູ່ສັນຍາຕ່າງປະເທດ.

**ມາດຕາ 109 ການປັບປຸງ ຫຼື ຕໍ່ອາຍຸ**

ຜູ້ມີສິດຕົກລົງສ້າງສັນຍາສາກົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 96, 98, 100, 102 ແລະ 104 ຂອງກົດໝາຍສະບັບນີ້ ມີສິດປັບປຸງ ຫຼື ຕໍ່ອາຍຸສັນຍາສາກົນ.

ສຳລັບລະບຽບການປັບປຸງ ຫຼື ຕໍ່ອາຍຸສັນຍາສາກົນ ໃຫ້ປະຕິບັດຄືກັນກັບລະບຽບການສ້າງສັນຍາສາກົນ ຕາມທີ່ໄດ້ກຳນົດໄວ້ໃນພາກນີ້.

ອົງການຂັ້ນສູນກາງ ແລະ ອົງການຂັ້ນແຂວງ ຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດຊາບ ພາຍຫຼັງທີ່ໄດ້ປັບປຸງ ຫຼື ຕໍ່ອາຍຸສັນຍາສາກົນ.

**ມາດຕາ 110 ການຍົກເລີກ ຫຼື ໂຈະການປະຕິບັດ**

ສັນຍາສາກົນ ຈະຖືກຍົກເລີກ ຫຼື ໂຈະການປະຕິບັດ ໃນກໍລະນີ ດັ່ງນີ້:

1. ໄດ້ກຳນົດໄວ້ໃນສັນຍາສາກົນນັ້ນ ຫຼື ຕາມການຕົກລົງລະຫວ່າງຝ່າຍລາວ ແລະ ຄູ່ສັນຍາຕ່າງປະເທດ;

2. ໃນເວລາຈັດຕັ້ງປະຕິບັດມີການລະເມີດຫຼັກການໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍສະບັບນີ້;

3. ຄູ່ສັນຍາຕ່າງປະເທດ ໄດ້ລະເມີດສັນຍາສາກົນຢ່າງຮ້າຍແຮງ.

ສຳລັບລະບຽບການຍົກເລີກ ຫຼື ໂຈະການປະຕິບັດສັນຍາສາກົນ ໃຫ້ປະຕິບັດຄືກັນກັບລະບຽບການສ້າງສັນຍາສາກົນ ຕາມທີ່ໄດ້ກຳນົດໄວ້ໃນພາກນີ້.

ຜູ້ມີສິດຕົກລົງສ້າງສັນຍາສາກົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 96, 98, 100, 102 ແລະ 104 ຂອງກົດໝາຍສະບັບນີ້ ມີສິດຍົກເລີກ ຫຼື ໂຈະການປະຕິບັດສັນຍາສາກົນ.

ອົງການຂັ້ນສູນກາງ ແລະ ອົງການຂັ້ນແຂວງ ຕ້ອງແຈ້ງໃຫ້ຄູ່ສັນຍາຕ່າງປະເທດ ແລະ ກະຊວງການຕ່າງປະເທດຊາບ ພາຍຫຼັງທີ່ໄດ້ຍົກເລີກ ຫຼື ໂຈະການປະຕິບັດສັນຍາສາກົນ.

## ໝວດທີ 8
## ການເກັບຮັກສາ, ສຳເນົາ ແລະ ເຜີຍແຜ່ສັນຍາສາກົນ

**ມາດຕາ 111 ການເກັບຮັກສາ**

ອົງການຂັ້ນສູນກາງ, ອົງການຂັ້ນແຂວງ ມີໜ້າທີ່ເກັບຮັກສາສັນຍາສາກົນສະບັບຕົ້ນ.

**ມາດຕາ 112 ການສຳເນົາ**

ອົງການຂັ້ນສູນກາງ, ອົງການຂັ້ນແຂວງ ຕ້ອງສົ່ງສຳເນົາສັນຍາສາກົນ ທີ່ມີຜົນສັກສິດນັ້ນ ໃຫ້ພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດ.

ໃນກໍລະນີສັນຍາສາກົນ ໄດ້ລົງນາມເປັນພາສາຕ່າງປະເທດ ຕ້ອງຄັດຕິດສະບັບທີ່ແປເປັນພາສາລາວພ້ອມ.

**ມາດຕາ 113 ການເຜີຍແຜ່**

ສັນຍາສາກົນໃນນາມອົງການຂັ້ນສູນກາງ, ອົງການຂັ້ນແຂວງ ຕ້ອງໄດ້ຮັບການເຜີຍແຜ່ແບບເປີດເຜີຍ ເວັ້ນເສຍແຕ່ມີການຕົກລົງເປັນຢ່າງອື່ນລະຫວ່າງຝ່າຍລາວ ແລະ ຄູ່ສັນຍາຕ່າງປະເທດ ຫຼື ມີການຕົກລົງເປັນຢ່າງອື່ນຂອງອົງການທີ່ມີສິດ.

## ພາກທີ IV
## ການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ

### ໝວດທີ 1
### ການຈັດຕັ້ງປະຕິບັດສົນທິສັນຍາ

**ມາດຕາ 114 ການສ້າງແຜນ ແລະ ການປະຕິບັດສົນທິສັນຍາ**

ພາຍຫຼັງໄດ້ຮັບການແຈ້ງກ່ຽວກັບການມີຜົນສັກສິດຂອງສົນທິສັນຍາຈາກກະຊວງການຕ່າງປະເທດແລ້ວ ອົງການທີ່ສະເໜີ ຕ້ອງສ້າງແຜນການປະຕິບັດສົນທິສັນຍາ ພາຍໃນເວລາ ສາມສິບວັນລັດຖະການ ເພື່ອນຳສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາຮັບຮອງ.

ໃນກໍລະນີອົງການທີ່ສະເໜີ ຫາກບໍ່ແມ່ນອົງການປະຕິບັດສົນທິສັນຍາໂດຍກົງ, ອົງການທີ່ສະເໜີຕ້ອງສະເໜີຕໍ່ນາຍົກລັດຖະມົນຕີ ພິຈາລະນາຕົກລົງກ່ຽວກັບອົງການປະຕິບັດ ພາຍໃນເວລາສິບຫ້າວັນ ລັດຖະການ ພາຍຫຼັງອົງການທີ່ມີສິດໄດ້ຕົກລົງຮັບປະຕິບັດສົນທິສັນຍາ. ອົງການປະຕິບັດສົນທິສັນຍາ ມີຄວາມຮັບຜິດຊອບປະຕິບັດໜ້າທີ່ຂອງອົງການທີ່ສະເໜີ ຕາມທີ່ໄດ້ກຳນົດໄວ້ໃນວັກ 1 ແລະ 5 ຂອງມາດຕານີ້ ແລະ ມາດຕາ 116, 117 ຂອງກົດໝາຍສະບັບນີ້.

ແຜນການປະຕິບັດສົນທິສັນຍາ ມີເນື້ອໃນ ດັ່ງນີ້:

1. ແຜນການລະອຽດໃນການປະຕິບັດສົນທິສັນຍາ;
2. ການແບ່ງຄວາມຮັບຜິດຊອບຂອງອົງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດສົນທິສັນຍາ;
3. ການສ້າງ, ປັບປຸງ ຫຼື ຍົກເລີກ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອປະຕິບັດສົນທິສັນຍາ;
4. ກົນໄກ ແລະ ວິທີການໃນການປະຕິບັດ, ການຄຸ້ມຄອງ, ການເງິນ ແລະ ມາດຕະການອື່ນທີ່ຈຳເປັນ ສຳລັບການປະຕິບັດສົນທິສັນຍາ;
5. ການໂຄສະນາ ແລະ ການເຜີຍແຜ່ສົນທິສັນຍາ.

ນາຍົກລັດຖະມົນຕີ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ ໂດຍການຮັບຮອງເອົາແຜນການປະຕິບັດ, ຕົກລົງມາດຕະການຊີ້ນຳ, ມາດຕະການດຳເນີນການ ຫຼື ມາດຕະການອື່ນ ເພື່ອປະຕິບັດສົນທິສັນຍາ.

ພາຍຫຼັງແຜນການປະຕິບັດສົນທິສັນຍາໄດ້ຮັບຮອງ, ອົງການທີ່ສະເໜີ ແລະ ອົງການອື່ນທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດແຜນດັ່ງກ່າວ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 115 ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ໃນການປະຕິບັດສົນທິສັນຍາ ດັ່ງນີ້:

1. ຕິດຕາມ, ຊຸກຍູ້ການປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

2. ເປັນເຈົ້າການ ຫຼື ສົມທົບປະຕິບັດມາດຕະການທີ່ຈຳເປັນ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດຂອງ ສປປ ລາວ ໃນກໍລະນີພາຄີຕ່າງປະເທດລະເມີດສົນທິສັນຍາ;

3. ສະຫຼຸບສັງລວມປະຈຳປີກ່ຽວກັບສະພາບການສ້າງ ແລະ ການປະຕິບັດສົນທິສັນຍາ ເພື່ອລາຍງານລັດຖະບານ ແລະ ສະເໜີລັດຖະບານລາຍງານຕໍ່ສະພາແຫ່ງຊາດ ຫຼື ລາຍງານຕາມການສະເໜີຂອງລັດຖະບານ, ປະທານປະເທດ ຫຼື ສະພາແຫ່ງຊາດ;

4. ເປັນເຈົ້າການ ຫຼື ສົມທົບຈັດຕັ້ງໂຄສະນາ, ເຜີຍແຜ່ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;

5. ເກັບກຳສະຖິຕິ ແລະ ທົບທວນກ່ຽວກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

6. ຊຸກຍູ້ການສ້າງ, ປັບປຸງ ຫຼື ຍົກເລີກ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອປະຕິບັດສົນທິສັນຍາ;

7. ປະເມີນຄວາມສອດຄ່ອງຂອງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກັບສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 116 ສິດ ແລະ ໜ້າທີ່ຂອງອົງການທີ່ສະເໜີ**

ອົງການທີ່ສະເໜີ ມີສິດ ແລະ ໜ້າທີ່ໃນການປະຕິບັດສົນທິສັນຍາທີ່ຕົນສ້າງ ດັ່ງນີ້:

1. ສ້າງແຜນ ແລະ ກຳນົດມາດຕະການໃນການປະຕິບັດສົນທິສັນຍາທີ່ມີຜົນສັກສິດ ສຳລັບ ສປປ ລາວ;

2. ສະເໜີສ້າງ, ປັບປຸງ ຫຼື ຍົກເລີກ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອປະຕິບັດສົນທິສັນຍາ;

3. ສະເໜີນາຍົກລັດຖະມົນຕີ ກຳນົດມາດຕະການ ເພື່ອປະຕິບັດສົນທິສັນຍາ;

4. ເປັນເຈົ້າການ ຫຼື ສົມທົບໃນການຈັດຕັ້ງໂຄສະນາ, ເຜີຍແຜ່ສົນທິສັນຍາທີ່ມີຜົນສັກສິດ ສຳລັບ ສປປ ລາວ;

5. ສະເໜີນາຍົກລັດຖະມົນຕີ ກຳນົດມາດຕະການທີ່ຈຳເປັນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງ ສປປ ລາວ ໃນກໍລະນີມີການລະເມີດສົນທິສັນຍາ;

6. ສ້າງບົດລາຍງານກ່ຽວກັບສະພາບການສ້າງ ແລະ ການປະຕິບັດສົນທິສັນຍາໃນຂອບເຂດການຄຸ້ມຄອງຂອງຕົນໃຫ້ກະຊວງການຕ່າງປະເທດ ເພື່ອສັງລວມລາຍງານຕໍ່ລັດຖະບານ ຊ້າສຸດບໍ່ໃຫ້ກາຍວັນທີ 15 ພະຈິກ ຂອງແຕ່ລະປີ ໂດຍສອດຄ່ອງກັບຮູບແບບຂອງກະຊວງການຕ່າງປະເທດວາງອອກ. ອົງການທີ່ສະເໜີ ລາຍງານສະພາບການສ້າງ ແລະ ການປະຕິບັດສົນທິສັນຍາ ຕໍ່ປະທານປະເທດ ຫຼື ລັດຖະບານ ຕາມການສະເໜີ;

7. ເປັນເຈົ້າການສົມທົບກັບກະຊວງການຕ່າງປະເທດ ແລະ ອົງການອື່ນທີ່ກ່ຽວຂ້ອງ ເພື່ອສະເໜີນາຍົກລັດຖະມົນຕີຕີກລົງກ່ຽວກັບການຕີຄວາມໝາຍ ແລະ ການປະຕິບັດບົດບັນຍັດຂອງສົນທິສັນຍາ ໃນກໍລະນີທີ່ມີຄວາມເຂົ້າໃຈແຕກຕ່າງກັນ ລວມທັງການປະຕິບັດບົດບັດຍັດຂອງສົນທິສັນຍາ;

8. ເປັນເຈົ້າການສົມທົບກັບອົງການອື່ນທີ່ກ່ຽວຂ້ອງໃນການສ້າງບົດລາຍງານຕາມພັນທະທີ່ໄດ້ກຳນົດໄວ້ໃນສົນທິສັນຍານັ້ນ.

### ມາດຕາ 117 ສິດ ແລະ ໜ້າທີ່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ

ກະຊວງ, ອົງການລັດທຽບເທົ່າກະຊວງ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໃຫ້ການຮ່ວມມືກັບອົງການທີ່ສະເໜີໃນການປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງເຄົາລົບ ແລະ ປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການຈັດຕັ້ງປະຕິບັດສັນຍາສາກົນ

### ມາດຕາ 118 ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ

ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ໃນການປະຕິບັດສັນຍາສາກົນ ດັ່ງນີ້:

1. ຕິດຕາມ, ຊຸກຍູ້ການປະຕິບັດສັນຍາສາກົນຂອງອົງການຂັ້ນສູນກາງ ແລະ ອົງການຂັ້ນແຂວງ;

2. ສະຫຼຸບ ສັງລວມປະຈຳປີກ່ຽວກັບສະພາບການສ້າງ ແລະ ການປະຕິບັດສັນຍາສາກົນຂອງອົງການຂັ້ນສູນກາງ, ອົງການຂັ້ນແຂວງ ເພື່ອລາຍງານຕໍ່ລັດຖະບານ ແລະ ສະເໜີລັດຖະບານລາຍງານຕໍ່ສະພາແຫ່ງຊາດ ຫຼື ລາຍງານຕາມການສະເໜີຂອງອົງການດັ່ງກ່າວ;

3. ເກັບກຳສະຖິຕິ ແລະ ທົບທວນກ່ຽວກັບສັນຍາສາກົນທີ່ອົງການຂັ້ນສູນກາງ, ອົງການຂັ້ນແຂວງໄດ້ສ້າງ.

### ມາດຕາ 119 ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ

ຄະນະປະຈຳສະພາແຫ່ງຊາດ ມອບໃຫ້ກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ໃນການປະຕິບັດສິດ ແລະ ໜ້າທີ່ກ່ຽວກັບການສ້າງ ແລະ ປະຕິບັດສັນຍາສາກົນ ດັ່ງນີ້:

1. ແນະນຳການສ້າງ ແລະ ການປະຕິບັດສັນຍາສາກົນໃນນາມສະພາແຫ່ງຊາດ, ກຳມາທິການ, ຄະນະເລຂາທິການ, ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການກວດສອບແຫ່ງລັດ;

2. ລາຍງານຕໍ່ສະພາແຫ່ງຊາດ ແລະ ແຈ້ງໃຫ້ລັດຖະບານ, ກະຊວງການຕ່າງປະເທດປະຈໍາປີ ຫຼື ຕາມການສະເໜີຂອງອົງການດັ່ງກ່າວ ກ່ຽວກັບສະພາບການສ້າງ ແລະ ການປະຕິບັດສັນຍາສາກົນ ໃນນາມສະພາແຫ່ງຊາດ, ກໍາມາທິການ, ຄະນະເລຂາທິການ, ກົງຈັກທີ່ຄະນະປະຈໍາສະພາແຫ່ງຊາດສ້າງຕັ້ງ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການກວດສອບແຫ່ງລັດ.

## ມາດຕາ 120 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງການເຄື່ອນໄຫວວຽກງານຕ່າງປະເທດ

ອົງການຄຸ້ມຄອງການເຄື່ອນໄຫວວຽກງານຕ່າງປະເທດ ມີ ສິດ ແລະ ໜ້າທີ່ ໃນການປະຕິບັດສັນຍາສາກົນ ດັ່ງນີ້:

1. ປະສານສົມທົບກັບ ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ໃນການແນະນໍາກ່ຽວກັບການສ້າງ ແລະ ການປະຕິບັດສັນຍາສາກົນຂອງອົງການຈັດຕັ້ງດັ່ງກ່າວ;

2. ສະຫຼຸບ ສັງລວມປະຈໍາປີກ່ຽວກັບສະພາບການສ້າງ ແລະ ການປະຕິບັດສັນຍາສາກົນຂອງສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ເພື່ອລາຍງານອົງການຈັດຕັ້ງຂັ້ນເທິງ, ແຈ້ງໃຫ້ລັດຖະບານ ແລະ ກະຊວງການຕ່າງປະເທດ ຫຼື ລາຍງານຕາມການສະເໜີຂອງອົງການດັ່ງກ່າວ.

## ມາດຕາ 121 ສິດ ແລະ ໜ້າທີ່ຂອງອົງການຂັ້ນສູນກາງ, ອົງການຂັ້ນແຂວງ

ອົງການຂັ້ນສູນກາງ, ອົງການຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ໃນການປະຕິບັດສັນຍາສາກົນດັ່ງນີ້:

1. ປະຕິບັດສັນຍາສາກົນທີ່ຕົນໄດ້ສ້າງຂຶ້ນຢ່າງເຂັ້ມງວດຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ. ພ້ອມດຽວກັນກໍຮຽກຮ້ອງໃຫ້ຄູ່ສັນຍາຕ່າງປະເທດປະຕິບັດສັນຍາສາກົນນັ້ນຢ່າງເຂັ້ມງວດ. ການປະຕິບັດສັນຍາສາກົນ ຕ້ອງບໍ່ລະເມີດຫຼັກການຕາມທີ່ກໍານົດໄວ້ໃນມາດຕາ 6 ຂອງກົດໝາຍສະບັບນີ້;

2. ສ້າງແຜນໄລຍະຍາວ ແລະ ແຜນປະຈໍາປີກ່ຽວກັບການປະຕິບັດສັນຍາສາກົນ ເພື່ອສົ່ງໃຫ້ກະຊວງການຕ່າງປະເທດຕິດຕາມ, ສັງລວມ ແລະ ລາຍງານລັດຖະບານ. ແຜນປະຈໍາປີ ສົ່ງຊ້າສຸດບໍ່ໃຫ້ກາຍວັນທີ ສິບຫ້າ ພະຈິກ ຂອງແຕ່ລະປີ;

3. ສໍາເນົາ, ໂຄສະນາ ແລະ ເຜີຍແຜ່ສັນຍາສາກົນທີ່ຕົນໄດ້ສ້າງ, ເວັ້ນເສຍແຕ່ມີການຕົກລົງເປັນຢ່າງອື່ນລະຫວ່າງຝ່າຍລາວ ແລະ ຄູ່ສັນຍາຕ່າງປະເທດ ຫຼື ຕາມການຕົກລົງເປັນຢ່າງອື່ນ ຂອງອົງການທີ່ມີສິດ;

4. ດໍາເນີນມາດຕະການທີ່ຈໍາເປັນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ໃນກໍລະນີສັນຍາສາກົນຖືກລະເມີດ;

5. ສະຫຼຸບ ສັງລວມກ່ຽວກັບສະພາບການສ້າງ ແລະ ການປະຕິບັດສັນຍາສາກົນຂອງຕົນເພື່ອລາຍງານຜູ້ມີສິດສ້າງສັນຍາສາກົນນັ້ນ ຊ້າສຸດບໍ່ໃຫ້ກາຍວັນທີ ສິບຫ້າ ພະຈິກ ຂອງທຸກປີ. ພ້ອມດຽວກັນ ກໍສົ່ງບົດລາຍງານໃຫ້ກະຊວງການຕ່າງປະເທດ ເພື່ອຕິດຕາມ, ສັງລວມ ແລະ ລາຍງານຕໍ່ລັດ

ຖະບານ. ບົດລາຍງານຕ້ອງກຳນົດແຈ້ງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ, ມາດຕະການສະເພາະ ເພື່ອປະຕິບັດສັນຍາສາກົນທີ່ຕົນໄດ້ສ້າງຂຶ້ນຢ່າງເຂັ້ມງວດ, ຍົກສູງປະສິດທິພາບ ແລະ ປະສິດທິຜົນໃນການຮ່ວມມືກັບສາກົນ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 122 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ການເຄື່ອນໄຫວວຽກງານສົນທິສັນຍາ ແລະ ສັນຍາສາກົນ ສ້າງຜົນເສຍຫາຍໃຫ້ແກ່ລະບອບການເມືອງ, ຄວາມໝັ້ນຄົງ, ສິດ ແລະ ພັນທະຂອງພົນລະເມືອງລາວ ກໍຄືຜົນປະໂຫຍດຂອງຊາດ ແລະ ປະຊາຊົນລາວບັນດາເຜົ່າ;

2. ດຳເນີນການສ້າງສົນທິສັນຍາ ແລະ ສັນຍາສາກົນທີ່ບໍ່ໄດ້ຮັບອະນຸຍາດ;

3. ສ້າງອຸປະສັກ, ຂັດຂວາງການສ້າງ ແລະ ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ;

4. ຂໍເອົາ, ທວງເອົາ, ໃຫ້ ຫຼື ຮັບ ສິນບົນຈາກບຸກຄົນອື່ນເພື່ອຜົນປະໂຫຍດສ່ວນຕົວ ແລະ ຄອບຄົວ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 123 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນທີ່ກ່ຽວຂ້ອງຂອງລັດ

ຫ້າມພະນັກງານ-ລັດຖະກອນທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ຜູ້ອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;

2. ຂໍເອົາ, ທວງເອົາ, ຮັບ ຫຼື ໃຫ້ສິນບົນ;

3. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາໃນການພິຈາລະນາຕາມລະບຽບການສ້າງ ແລະ ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ຢ່າງບໍ່ມີເຫດຜົນໂດຍບໍ່ຖືກຕ້ອງຕາມກົດໝາຍ;

4. ເປີດເຜີຍຄວາມລັບກ່ຽວກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ບໍ່ໄດ້ຮັບອະນຸຍາດຈາກອົງການລັດທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VI

# ການຄຸ້ມຄອງ ແລະ ການກວດກາ
# ວຽກງານສົນທິສັນຍາ ແລະ ສັນຍາສາກົນ

## ໝວດທີ 1
## ການຄຸ້ມຄອງວຽກງານສົນທິສັນຍາ ແລະ ສັນຍາສາກົນ

**ມາດຕາ 124 ອົງການຄຸ້ມຄອງ**

ລັດຖະບານເປັນຜູ້ຄຸ້ມຄອງວຽກງານສົນທິສັນຍາ ແລະ ສັນຍາສາກົນ ໂດຍມອບໃຫ້ກະຊວງການຕ່າງປະເທດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບອົງການຂັ້ນສູນກາງ, ອົງການຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອົງການຂັ້ນສູນກາງ, ອົງການຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ໃນການຄຸ້ມຄອງວຽກງານສົນທິສັນຍາ ແລະ ສັນຍາສາກົນ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 125 ການຄຸ້ມຄອງວຽກງານສົນທິສັນຍາ ແລະ ສັນຍາສາກົນ**

ການຄຸ້ມຄອງວຽກງານສົນທິສັນຍາ ແລະ ສັນຍາສາກົນ ມີເນື້ອໃນ ດັ່ງນີ້:

1. ສ້າງ ແລະ ຈັດຕັ້ງປະຕິບັດນິຕິກຳກ່ຽວກັບວຽກງານສົນທິສັນຍາ ແລະ ສັນຍາສາກົນ;
2. ໂຄສະນາ, ເຜີຍແຜ່ ແລະ ແນະນຳການປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສົນທິສັນຍາ ແລະ ສັນຍາສາກົນ;
3. ຕິດຕາມ, ກວດກາ, ຍ້ອງຍໍ ແລະ ນຳໃຊ້ມາດຕະການ ເມື່ອມີການລະເມີດກົດໝາຍກ່ຽວກັບວຽກງານສົນທິສັນຍາ ແລະ ສັນຍາສາກົນ;
4. ຈັດຕັ້ງ ແລະ ຮັບປະກັນການປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
5. ສ້າງ ແລະ ຮັບປະກັນການປະຕິບັດສັນຍາສາກົນໃຫ້ສອດຄ່ອງກັບກົດໝາຍ;
6. ສຳເນົາ, ແປ ແລະ ພິມເຜີຍແຜ່ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
7. ໂຄສະນາ, ເຜີຍແຜ່ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
8. ເກັບກຳສະຖິຕິ ແລະ ເກັບຮັກສາສົນທິສັນຍາ ແລະ ສັນຍາສາກົນ;
9. ສ້າງແຜນໄລຍະຍາວ ແລະ ແຜນປະຈຳປີກ່ຽວກັບການສ້າງ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ;
10. ລາຍງານກ່ຽວກັບສະພາບການສ້າງ ແລະ ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ;
11. ພິຈາລະນາຄຳຮ້ອງທຸກກ່ຽວກັບການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ;
12. ຮ່ວມມືກັບສາກົນກ່ຽວກັບວຽກງານສົນທິສັນຍາ ແລະ ສັນຍາສາກົນ.

## ໝວດທີ 2
## ການກວດກາວຽກງານສິນທິສັນຍາ ແລະ ສັນຍາສາກົນ

### ມາດຕາ 126 ອົງການກວດກາ

ອົງການກວດກາວຽກງານສິນທິສັນຍາ ແລະ ສັນຍາສາກົນ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງທີ່ໄດ້ກຳນົດໄວ້ໃນມາດຕາ 124 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການກວດກາລັດຖະບານ.

### ມາດຕາ 127 ເນື້ອໃນການກວດກາ

ການກວດກາວຽກງານສິນທິສັນຍາ ແລະ ສັນຍາສາກົນ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສິນທິສັນຍາ ແລະ ສັນຍາສາກົນ;

2. ການສ້າງ ແລະ ການປະຕິບັດສິນທິສັນຍາ ແລະ ສັນຍາສາກົນ;

3. ການປະຕິບັດຂອບເຂດສິດ ແລະ ໜ້າທີ່ຂອງອົງການທີ່ກ່ຽວຂ້ອງໃນການສ້າງ ແລະ ການປະຕິບັດສິນທິສັນຍາ ແລະ ສັນຍາສາກົນ.

### ມາດຕາ 128 ຮູບການການກວດກາ

ການກວດກາມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງຄັ້ງ ຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

# ພາກທີ VII

# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 129 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

## ມາດຕາ 130 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

## ມາດຕາ 131 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງມີລັກສະນະເບົາ ແລະ ເປັນເທື່ອທຳອິດ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ ພ້ອມທັງເຮັດບົດບັນທຶກ.

## ມາດຕາ 132 ມາດຕະການທາງວິໄນ

ພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ໄດ້ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ, ບໍ່ຈິງໃຈລາຍງານ ແລະ ຫຼົບຫຼີກຈາກການກະທຳຜິດຂອງຕົນ ຈະຖືກລົງວິໄນ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ພ້ອມທັງບັນທຶກໄວ້ໃນສຳນວນຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ມີຕຳແໜ່ງຕໍ່າກວ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນຂອງຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ແກ່ການຈັດຕັ້ງຢ່າງຄົບຖ້ວນ.

## ມາດຕາ 133 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງປະເທດຊາດ, ຂອງປະຊາຊົນລາວບັນດາເຜົ່າ ຈາກການສ້າງ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ຫຼື ເປັນການລະເມີດອື່ນທາງແພ່ງ ຈະຕ້ອງໃຊ້ແທນຄືນຄ່າເສຍຫາຍຕາມມູນຄ່າຕົວຈິງທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 134 ມາດຕະການທາງອາຍາ**

ບຸກຄົນທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ ກໍຈະຖືກລົງໂທດຕາມກໍລະນີເບົາ ຫຼື ໜັກ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 135 ງົບປະມານ**

ໃນການເຄື່ອນໄຫວວຽກງານການສ້າງ ແລະ ການປະຕິບັດ ສົນທິສັນຍາ ແລະ ສັນຍາສາກົນ ໃຫ້ນຳໃຊ້ງົບປະມານຂອງລັດ.

**ມາດຕາ 136 ການຈັດຕັ້ງປະຕິບັດ**

ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການຂັ້ນແຂວງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 137 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້